ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ.........../ສພຊ

ນະຄອນຫຼວງວຽງຈັນ, ວັນທີ..................

# "ຮ່າງ"
# ກົດໝາຍ
# ວ່າດ້ວຍຊົນລະປະທານ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ, ກວດກາວຽກງານຊົນລະປະທານ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແນໃສ່ເຮັດໃຫ້ກິດຈະການຊົນລະປະທານ ຖືກຕ້ອງຕາມ ມາດຕະຖານເຕັກນິກ ແລະ ທັນສະໄໝ, ຮັບປະກັນການສະໜອງນ້ຳ, ຫຼຸດຜ່ອນຄວາມເສັຍຫາຍຈາກໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ໃຫ້ແກ່ພື້ນທີ່ການຜະລິດກະສິກຳ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 (ປັບປຸງ) ຊົນລະປະທານ**

ຊົນລະປະທານ ແມ່ນ ການຄຸ້ມຄອງບໍລິຫານ-ຈັດການ, ການສະໜອງ ແລະ ລະບາຍນ້ຳ ເພື່ອການຜະລິດກະສິກຳ ຊຶ່ງປະກອບດ້ວຍ ລະບົບຫົວງານ, ລະບົບສົ່ງນ້ຳ ແລະ ລະບົບລະບາຍນ້ຳ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫົວງານ** ໝາຍເຖິງ ເຂື່ອນຊົນລະປະທານ, ອ່າງເກັບນ້ຳ, ຝາຍນ້ຳລົ້ນ, ທາງລະບາຍນ້ຳລົ້ນ, ຈັກສູບນ້ຳ, ປະຕູນ້ຳ ທີ່ສົ່ງເຂົ້າສູ່ລະບົບສົ່ງນ້ຳ;
2. **ເຂື່ອນຊົນລະປະທານ** ໝາຍເຖິງ ສິ່ງກໍ່ສ້າງຊຶ່ງເຮັດດ້ວຍດິນ, ຫີນ ຫຼື ເບຕົງ ທີ່ສ້າງຂຶ້ນຕັນແລວ ນ້ຳ ເພື່ອຍົກລະດັບນ້ຳໃຫ້ສູງຂຶ້ນ ແລະ ອວ່າຍນ້ຳ ເຂົ້າສູ່ພື້ນທີ່ການຜະລິດກະສິກຳ ຜ່ານລະບົບສົ່ງນ້ຳ;
3. **ທາງລະບາຍນ້ຳລົ້ນ** ໝາຍເຖິງ ສິ່ງກໍ່ສ້າງທີ່ສ້າງຂຶ້ນ ເພື່ອລະບາຍນ້ຳອອກຈາກອ່າງເກັບນ້ຳ, ບໍ່ໃຫ້ລະດັບນ້ຳໃນອ່າງສູງຂຶ້ນລົ້ນຜ່ານສັນເຂື່ອນ ເພື່ອຮັບປະກັນຄວາມປອດໄພຂອງຕົວເຂື່ອນ;

**4. ຝາຍນ້ຳລົ້ນ** ໝາຍເຖິງ ສິ່ງກໍ່ສ້າງທີ່ເຮັດດ້ວຍຫີນ, ເບຕົງ ຊຶ່ງສ້າງຂຶ້ນຕັ້ນແລວນ້ຳ ເພື່ອຍົກລະ ດັບນ້ຳໃຫ້ສູງຂຶ້ນ ສາມາດໄຫຼລົ້ນຜ່ານສັນຝາຍໄດ້ ຕາມເຕັກນິກການອອກແບບ ແລະ ອ່ວາຍນ້ຳເຂົ້າສູ່ພື້ນທີ່ການຜະລິດກະສິກຳ ຜ່ານລະບົບສົ່ງນ້ຳ;

**5. ປະຕູນ້ຳ** ໝາຍເຖິງ ສິ່ງກໍ່ສ້າງທີ່ສ້າງຂຶ້ນ ເພື່ອຄວບຄຸມປະລິມານການໄຫຼຂອງນ້ຳ ດ້ວຍລະບົບປະຕູປິດ-ເປີດ ຈາກຫົວງານ, ທາງລະບາຍນ້ຳ ຫຼື ສາຍນ້ຳ ໄປສູ່ລະບົບສົ່ງນ້ຳ;

**6. ອ່າງຜ່ອນກຳລັງນ້ຳ** ໝາຍເຖິງ ສິ່ງກໍ່ສ້າງທີ່ສ້າງຂຶ້ນ ເພື່ອຫຼຸດຜ່ອນກຳລັງແຮງຂອງນ້ຳ ກ່ອນໄຫຼເຂົ້າສູ່ຄອງເໝືອງແມ່ ແລະ ແມ່ນ້ຳລຳເຊທຳມະຊາດ ແນໃສ່ປ້ອງກັນການເຊາະເຈື່ອນ;

**7. ລະບົບສົ່ງນ້ຳ** ໝາຍເຖິງ ລະບົບຄອງເໝືອງ ແລະ ທໍ່ສົ່ງນ້ຳ ເພື່ອສົ່ງນ້ຳເຂົ້າສູ່ພື້ນທີ່ການຜະລິດ ຊຶ່ງປະກອບມີ ຄອງເໝືອງແມ່, ຄອງເໝືອງຂັ້ນສອງ, ຄອງເໝືອງຂັ້ນສາມ, ຄອງຄັນນາຄູ່, ອາຄານຄວບຄຸມ ແລະ ແຈກຈ່າຍນ້ຳຕາມຄອງເໝືອງ;

**8. ຄອງເໝືອງແມ່** ໝາຍເຖິງ ຄອງເໝືອງທີ່ຮັບນ້ຳຈາກຫົວງານ ແລະ ສົ່ງນ້ຳໃຫ້ບັນດາຄອງເໝືອງຂັ້ນສອງ ຫຼື ເພື່ອສົ່ງນ້ຳຫົດພື້ນທີ່ການຜະລິດ;

**9. ຄອງເໝືອງຂັ້ນສອງ** ໝາຍເຖິງ ຄອງເໝືອງທີ່ແຍກ ແລະ ຮັບນ້ຳ ມາຈາກຄອງເໝືອງແມ່ ເພື່ອສົ່ງນ້ຳ ໃຫ້ບັນດາຄອງເໝືອງຂັ້ນສາມ ຫຼື ເພື່ອສົ່ງນ້ຳຫົດພື້ນທີ່ການຜະລິດ;

**10.ຄອງເໝືອງຂັ້ນສາມ** ໝາຍເຖິງ ຄອງເໝືອງທີ່ແຍກ ແລະ ຮັບນ້ຳມາຈາກຄອງເໝືອງຂັ້ນສອງ ເພື່ອສົ່ງນ້ຳເຂົ້າຄອງຄັນນາຄູ່ ຫຼື ເພື່ອສົ່ງນ້ຳຫົດພື້ນທີ່ການຜະລິດ;

**11.ຄອງຄັນນາຄູ່** ໝາຍເຖິງ ຄອງເໝືອງທີ່ແຍກ ແລະ ຮັບນ້ຳມາຈາກຄອງເໝືອງຂັ້ນສາມ ເພື່ອສົ່ງ ນ້ຳຫົດພື້ນທີ່ການຜະລິດ;

**12.ອາຄານຕາມຄອງເໝືອງ** ໝາຍເຖິງ ສິ່ງກໍ່ສ້າງທີ່ສ້າງຂຶ້ນຢູ່ຕາມຄອງເໝືອງ ເພື່ອຄວບຄຸມ ແລະ ອຳນວຍຄວາມສະດວກໃນການບໍລິຫານຈັດການນ້ຳ;

**13.ຄອງລະບາຍນ້ຳ** ໝາຍເຖິງ ຄອງທີ່ມີລະດັບຕ່ຳກວ່າພື້ນທີ່ການຜະລິດ ຊຶ່ງສ້າງຂຶ້ນເພື່ອລະບາຍ ນ້ຳທີ່ເກີນຄວາມຕ້ອງການ ຫຼື ຖ້ວມຂັງພື້ນທີ່ການຜະລິດກະສິກຳ ເພື່ອຫຼີກເວັ້ນຜົນກະທົບຕໍ່ພື້ນທີ່ການຜະລິດກະສິກຳ ແລະ ສິ່ງແວດລ້ອມ;

**14.ລະບົບປ້ອງກັນນ້ຳຖ້ວມ ແລະ ການລະບາຍນ້ຳຖ້ວມຂັງພື້ນທີ່ກະສິກຳ** ໝາຍເຖິງ ຄູປ້ອງກັນນ້ຳຖ້ວມ, ປະຕູຄວບຄຸມ, ລະບົບຄອງລະບາຍນ້ຳ ແລະ ສະຖານີຈັກສູບນ້ຳ ເພື່ອປ້ອງກັນບໍ່ໃຫ້ນ້ຳໃນແມ່ນ້ຳລຳເຊໄຫຼເຂົ້າຖ້ວມພື້ນທີ່ກະສິກຳ ແລະ ລະບາຍນ້ຳຖ້ວມຂັງພື້ນທີ່ກະສິກຳ ອອກສູ່ແມ່ນ້ຳລຳເຊ;

**15.ຊົນລະກະເສດ** ໝາຍເຖິງ ການຜະລິດກະສິກຳໃນເຂດຊົນລະປະທານ ດ້ວຍການນຳໃຊ້ເຕັກ ນິກວິທະຍາສາດ ແລະ ນະວັດຕະກຳໃໝ່ ຊຶ່ງປະກອບດ້ວຍ ລະບົບຊົນລະປະທານ, ເສັ້ນທາງຂົນສົ່ງການຜະ ລິດ, ອາຄານຄຸ້ມຄອງບໍລິຫານໂຄງການ, ຫ້ອງທົດລອງ, ກົນຈັກກະສິກຳ, ລານຕາກ, ໂຮງສີ, ໂຮງອົບ ແລະ ສາງເກັບຜົນຜະລິດ;

**16.ເຂດຊົນລະປະທານ** ໝາຍເຖິງ ຂອບເຂດພື້ນທີ່ຊົນລະປະທານ ຊຶ່ງປະກອບດ້ວຍ ເນື້ອທີ່ເຂດຮັບ ນ້ຳ, ລະບົບຫົວງານ, ລະບົບຄອງເໝືອງ, ລະບົບຄອງລະບາຍ ແລະ ພື້ນທີ່ການຜະລິດ ທີ່ລະບົບຊົນລະປະທານສາມາດສະໜອງນ້ຳໄດ້ຕາມການສຶກສາ, ສຳຫຼວດ-ອອກແບບ ໂດຍມີຫຼັກເຂດສະຫງວນກຳນົດໄວ້ ເພື່ອປ້ອງກັນບໍ່ໃຫ້ມີການຫັນປ່ຽນເຂດດັ່ງກ່າວ ໄປຮັບໃຊ້ເປົ້າໝາຍອື່ນ ນອກຈາກໄດ້ຮັບການອະນຸຍາດຈາກຂະແໜງການ;

**17.ການກໍ່ສ້າງ ແລະ ຕິດຕັ້ງ** ໝາຍເຖິງ ການກໍ່ສ້າງລະບົບຫົວງານ, ລະບົບສົ່ງນ້ຳ-ອາຄານຕາມຄອງເໝືອງ, ລະບົບລະບາຍນ້ຳ-ອາຄານຄວບຄຸມນ້ຳ, ລະບົບໄຟຟ້າ ລວມທັງການປະກອບອຸປະກອນຕ່າງໆ;

**18.ການຕໍ່ເຕີມ** ໝາຍເຖິງ ການຂະຫຍາຍພື້ນທີ່ ຕາມການອອກແບບ ແລະ ບໍລິມາດ ຂອງສິ່ງກໍ່ ສ້າງເຊັ່ນ: ການຍົກລະດັບສັນເຂື່ອນ, ການເພີ່ມຈັກສູບນ້ຳ, ການຂະຫຍາຍລະບົບຄອງສົ່ງນ້ຳ, ອາຄານແບ່ງນ້ຳ, ຄອງລະບາຍນ້ຳ ແລະ ອື່ນໆ ດ້ວຍການຫັນໄປສູ່ທັນສະໄໝ ເທື່ອລະກ້າວ;

**19.ຊົນລະປະທານປວງຊົນ** ໝາຍເຖິງ ຊົນລະປະທານທີ່ປະຊາຊົນສ້າງຂຶ້ນເອງ ຫຼື ປະຊາຊົນມີສ່ວນຮ່ວມກັບພາກລັດ ເຊັ່ນ: ກົງພັດນ້ຳ, ຝາຍພັກນ້ຳ, ຝາຍໄມ້, ຝາຍກອຍຫີນ, ການນຳໃຊ້ທໍ່ເຮັດຮາງລິນ, ນຳໃຊ້ນ້ຳສ້າງ, ໜອງສະ ແລະ ອື່ນໆ ໂດຍນຳໃຊ້ວັດຖຸທ້ອງຖິ່ນເປັນຫຼັກ;

**20.ຊົນລະປະທານຄູກັນນ້ຳ** ໝາຍເຖິງ ຊົນລະປະທານ ທີ່ສ້າງຂຶ້ນເພື່ອແກ້ບັນຫາໃນພື້ນທີ່ນ້ຳຖ້ວມຂັງໃນລະດູຝົນ ໃຫ້ສາມາດທຳການຜະລິດໄດ້ຕະຫຼອດປີ ຊຶ່ງປະກອບດ້ວຍ ຄູປ້ອງກັນນ້ຳ, ຄອງເກັບນ້ຳ, ລະບົບສິ່ງນ້ຳ, ລະບົບສູບນ້ຳລະບາຍ ແລະ ປະຕູຄວບຄຸມນ້ຳ;

**21.ຊົນລະປະທານນ້ຳໃຕ້ດິນນຳໃຊ້ພະລັງງານແສງຕາເວັນໃນເຂດພື້ນທີ່ແຫ້ງແລ້ງ** ໝາຍເຖິງ ຊົນລະປະທານ ທີ່ສ້າງຂຶ້ນເພື່ອແກ້ບັນຫາໃນພື້ນທີ່ແຫ້ງແລ້ງ ບໍ່ມີແຫຼ່ງນ້ຳໜ້າດິນ ໃຫ້ສາມາດທຳການຜະລິດໄດ້ຕະຫຼອດປີ ຊຶ່ງປະກອບດ້ວຍ ປ້ຳສູບນ້ຳ, ລະບົບພະລັງງານແສງຕາເວັນ, ໜອງເກັບກັກນ້ຳ ແລະ ລະບົບຄອງສົ່ງນ້ຳ;

**22.ອ່າງເກັບນ້ຳຊົນລະປະທານ** ໝາຍເຖິງ ພື້ນທີ່ເກັບນ້ຳທີ່ເກີດຂຶ້ນຈາກການກໍ່ສ້າງເຂື່ອນ, ຝາຍ ນ້ຳລົ້ນ ຫຼື ການກໍ່ສ້າງອື່ນ ເພື່ອເກັບນ້ຳໄວ້ໃຫ້ແກ່ການຜະລິດກະສິກຳ, ຕ້ານແລ້ງ-ຕ້ານຖ້ວມ, ຄົມມະນາຄົມ, ການທ່ອງທ່ຽວ, ການປະມົງ, ອຸດສາຫະກຳ, ນ້ຳປະປາ ແລະ ຮັບໃຊ້ການດຳລົງຊີວິດຂອງປະຊາຊົນ;

**23.ຜູ້ທີ່ໄດ້ຮັບຜົນປະໂຫຍດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນປະ ໂຫຍດທາງກົງ ຫຼື ທາງອ້ອມ ຈາກຊົນລະປະທານ;

**24.ພື້ນທີ່ຮັບນ້ຳຊົນລະປະທານ** ໝາຍເຖິງ ພື້ນທີ່ການຜະລິດກະສິກຳ ທີ່ໄດ້ຮັບນ້ຳຈາກການສະໜອງນ້ຳຂອງລະບົບຊົນລະປະທານ;

**25.ຂັ້ນໄດປາ ຫຼື ທາງຜ່ານປາ** ໝາຍເຖິງ ສິ່ງກໍ່ສ້າງດ້ານວິສະວະກຳ ເພື່ອຫຼຸດຜ່ອນກະແສນ້ຳໃຫ້ ຊ້າລົງແນໃສ່ເຮັດໃຫ້ປາ ແລະ ສັດນ້ຳຊະນິດອື່ນ ສາມາດລອຍຂຶ້ນໄປດ້ານເໜືອກະແສນ້ຳໄດ້;

**26.ເຂດສະຫງວນຊົນລະປະທານ** ໝາຍເຖິງ ເຂດຫວງຫ້າມພື້ນທີ່ໃນບໍລິເວນລະບົບຫົວງານ, ລະບົບຄອງເໜືອງ ແລະ ລະບົບຄອງລະບາຍ ເພື່ອປ້ອງກັນ ບໍ່ໃຫ້ມີການຫັນປ່ຽນເຂດດັ່ງກ່າວ ໄປຮັບໃຊ້ເປົ້າໝາຍອື່ນ;

**27.ວິຊາຊີບຊົນລະປະທານ** ໝາຍເຖິງ ນັກວິຊາການທີ່ມີຄວາມຮູ້, ຄວາມສາມາດທາງດ້ານວິທະ ຍາສາດເຕັກນິກ ກ່ຽວກັບຊົນລະປະທານ;

**28.ຄະນະຮັບຜິດຊອບໂຄງການ** ໝາຍເຖິງ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຈາກເຈົ້າຂອງໂຄງການ ໃຫ້ໄປຮັບຜິດຊອບໃນການບໍລິຫານ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ໃຫ້ດຳເນີນການໄປຕາມແຜນ ແລະ ມີປະສິດທິຜົນ;

**29.ຄະນະກຳມະການປະມູນ** ໝາຍເຖິງ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຫຼື ຫົວໜ້າກົມຊົນລະປະທານ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ເຈົ້ານະຄອນ, ມີພາລະບົດບາດ ເປັນເສນາທິການໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດການປະມູນ;

**30.ບໍລິສັດທີ່ປຶກສາ** ໝາຍເຖິງ ບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ເຊັນສັນຍາກັບເຈົ້າຂອງໂຄງການ ເພື່ອໃຫ້ຄຳເຫັນ ຫຼື ຄຳແນະນຳທາງດ້ານເຕັກນິກວິຊາການ ລວມທັງດ້ານການບໍລິຫານໂຄງການ, ດຳເນີນການສຶກສາຄວາມ ເປັນໄປໄດ້, ການສຳຫຼວດ, ການອອກແບບ ແລະ ການຄວບຄຸມການກໍ່ສ້າງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຊົນລະປະທານ**

ລັດ ສົ່ງເສີມ ວຽກງານຊົນລະປະທານ ດ້ວຍການວາງນະໂຍບາຍ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ທີ່ທັນສະໄໝ, ພັດທະນາບຸກຄະລາກອນ, ສະໜອງງົບປະມານ ແລະ ກໍ່ສ້າງໂຄງລ່າງພື້ນຖານ ທີ່ຈຳເປັນ ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ອົງການຄຸ້ມຄອງວຽກງານຊົນລະປະທານ ໃຫ້ມີປະ ສິດທິພາບ, ປະສິດທິຜົນ.

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມາລົງທຶນເຂົ້າໃນກິດຈະການຊົນລະປະທານ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານຊົນລະປະທານ**

ວຽກງານຊົນລະປະທານ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ຍຸດທະສາດ, ແຜນພັດທະ ນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຂອງ ສປປ ລາວ;
2. ຮັບປະກັນມາດຕະຖານເຕັກນິກ, ຄຸນນະພາບ ຂອງການນໍາໃຊ້ຊົນລະປະທານຢ່າງຍາວນານ;
3. ນໍາໃຊ້ນໍ້າ ຢ່າງປະຢັດ, ມີປະສິດທິຜົນ ໂດຍການມີສ່ວນຮ່ວມຂອງຊາວກະສິກອນ ແລະ ຜູ້ດໍາເນີນທຸລະກິດ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ;
4. ຮັບປະກັນການຄຸ້ມຄອງ ແລະ ນໍາໃຊ້ໂຄງການຊົນລະປະທານ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນຜົນປະໂຫຍດຂອງລັດ, ລວມໝູ່, ການຈັດຕັ້ງ ແລະ ຜົນປະໂຫຍດອັນຊອບທໍາ ຂອງບຸກຄົນ ຕາມລະບຽບກົດໝາຍ;
5. ມີການຈັດຕັ້ງ, ງົບປະມານ ແລະ ນິຕິກໍາຮອງຮັບ ໃນການຄຸ້ມຄອງ ແລະ ນໍາໃຊ້ໂຄງການຊົນລະປະທານ.

**ມາດຕາ 6 (ປັບປຸງ) ພັນທະຂອງພົນລະເມືອງກ່ຽວກັບວຽກງານຊົນລະປະທານ**

ພົນລະເມືອງທຸກຄົນ ມີພັນທະໃນການເຂົ້າຮ່ວມ, ປະກອບສ່ວນ ແລະ ໃຫ້ການຮ່ວມມື ໃນວຽກງານຊົນລະປະທານ ຕາມກົດໝາຍ ເປັນຕົ້ນ ການປົກປັກຮັກສາ, ການແຈ້ງ ຫຼື ລາຍງານ ກ່ຽວກັບ ການທໍາລາຍຊົນລະປະທານ, ການກະທໍາທີ່ເປັນການລະເມີດກົດໝາຍ, ການສະກັດກັ້ນຜົນກະທົບທາງລົບ ທີ່ຈະເກີດຂຶ້ນຕໍ່ຊົນລະປະທານ.

**ມາດຕາ 7 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກ່ຽວກັບວຽກງານຊົນລະປະທານໃນ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊົນລະປະທານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ພັດທະນາບຸກຄະລາກອນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຂະຫຍາຍຕົວ, ເຂັ້ມແຂງ, ທັນສະໄໝ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດ ແລະ ຂະໜາດຊົນລະປະທານ

**ມາດຕາ 9 (ປັບປຸງ) ປະເພດຊົນລະປະທານ**

ຊົນລະປະທານ ຢູ່ ສປປ ລາວ ມີ ສອງ ປະເພດ ດັ່ງນີ້:

1. ຊົນລະປະທານ ແບບນໍ້າໄຫຼເອງ;
2. ຊົນລະປະທານ ແບບນໍາໃຊ້ພະລັງງານ.

**ມາດຕາ 10 (ປັບປຸງ) ຊົນລະປະທານແບບນໍ້າໄຫຼເອງ**

ຊົນລະປະທານແບບນໍ້າໄຫຼເອງ ແມ່ນ ຊົນລະປະທານ ທີ່ມີແຫຼ່ງນໍ້າ, ທີ່ຕັ້ງຂອງຫົວງານ ສູງກວ່າລະດັບພື້ນທີ່ກະສິກໍາ ຊຶ່ງປະກອບດ້ວຍ ເຂື່ອນ, ຝາຍນໍ້າລົ້ນ ແລະ ປະຕູນໍ້າ.

**ມາດຕາ 11 (ປັບປຸງ) ຊົນລະປະທານແບບນໍາໃຊ້ພະລັງງານ**

ຊົນລະປະທານແບບນໍາໃຊ້ພະລັງງານ ແມ່ນ ຊົນລະປະທານ ທີ່ມີແຫຼ່ງນໍ້າ, ທີ່ຕັ້ງຂອງຫົວງານ ຕໍ່າກວ່າລະດັບພື້ນທີ່ກະສິກໍາ ຊຶ່ງຕ້ອງໄດ້ນໍາໃຊ້ຈັກສູບນໍ້າ ດ້ວຍໄຟຟ້າ, ນໍ້າມັນ, ພະລັງງານລົມ ແລະ ພະລັງງານແສງຕາເວັນ.

**ມາດຕາ 12 (ໃໝ່) ຊົນລະປະທານຄູກັນນໍ້າ**

ຊົນລະປະທານຄູກັນນໍ້າ ແມ່ນ ຊົນລະປະທານທີ່ສ້າງຂຶ້ນ ເພື່ອແກ້ບັນຫາໃນພື້ນທີ່ນໍ້າຖ້ວມຂັງ ໃນລະດູຝົນ ໃຫ້ສາມາດທໍາການຜະລິດກະສິກໍາໄດ້ຕະຫຼອດປີ ຊຶ່ງປະກອບດ້ວຍ ຄູປ້ອງກັນ, ຄອງເກັບນໍ້າ, ລະບົບຊົນລະປະທານ, ລະບົບລະບາຍນໍ້າ, ຈັກສູບນໍ້າ ແລະ ປະຕູຄອບຄຸມນໍ້າ.

**ມາດຕາ 13 (ໃໝ່) ຊົນລະປະທານນໍ້າໃຕ້ດິນ**

ຊົນລະປະທານນໍ້າໃຕ້ດິນ ແມ່ນ ຊົນລະປະທານທີ່ສ້າງຂຶ້ນ ເພື່ອແກ້ບັນຫາໃນພື້ນທີ່ແຫ້ງແລ້ງ ບໍ່ມີແຫຼ່ງນໍ້າໜ້າດິນໃຫ້ສາມາດທໍາການຜະລິດກະສິກໍາໄດ້ຕະຫຼອດປີ ຊຶ່ງປະກອບດ້ວຍ ຈັກສູບນໍ້າລະບົບໄຟຟ້າ, ລະບົບພະລັງງານແສງຕາເວັນ, ໜອງເກັບກັກນໍ້າ ແລະ ລະບົບຄອງສົ່ງນໍ້າ.

**ມາດຕາ 14 ຂະໜາດໂຄງການຊົນລະປະທານ**

ຊົນລະປະທານ ແບ່ງອອກເປັນ ສີ່ ຂະໜາດ ດັ່ງນີ້:

1. ຊົນລະປະທານຂະໜາດໃຫຍ່ ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດໄດ້ ຫຼາຍກວ່າ ໜຶ່ງພັນ ເຮັກຕາ ຂຶ້ນໄປ;
2. ຊົນລະປະທານຂະໜາດກາງ ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດໄດ້ ຫຼາຍກວ່າ ໜຶ່ງຮ້ອຍ ຫາ ໜຶ່ງພັນ ເຮັກຕາ;
3. ຊົນລະປະທານຂະໜາດນ້ອຍ ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດໄດ້ ຫຼາຍກວ່າ ສິບ ຫາ ໜຶ່ງຮ້ອຍ ເຮັກຕາ;
4. ຊົນລະປະທານປອງຊົນ ແມ່ນ ຊົນລະປະທານ ທີ່ສາມາດສະໜອງນໍ້າໃຫ້ເນື້ອທີ່ການຜະລິດໄດ້ ສິບ ເຮັກຕາ ລົງມາ.

**ມາດຕາ 15 (ປັບປຸງ) ກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ລາຄາຫົວໜ່ວຍຊົນລະ ປະທານ**

ກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ລາຄາຫົວໜ່ວຍຊົນລະປະທານ ແມ່ນ ມາດຕະຖານທາງດ້ານຫຼັກການວິຊາການ ກ່ຽວກັບວຽກງານຊົນລະປະທານ ເພື່ອເປັນບ່ອນອີງໃນການຂຶ້ນແຜນງົບປະມານ, ຕິດຕາມ, ກວດກາ, ປະເມີນຜົນໂຄງການ ແລະ ນໍາໃຊ້ເຂົ້າໃນກິດຈະການຊົນລະປະທານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້.

ກະຊວງກະສິກໍາ ແລະ ປ່າໄມ້ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຮັບຮອງກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ລາຄາຫົວໜ່ວຍຊົນລະປະທານ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ. ສໍາລັບລາຄາຫົວໜ່ວຍຊົນລະປະທານ ໃຫ້ນໍາສະເໜີ ລັດຖະບານ ພິຈາລະນາຮັບຮອງ.

# ພາກທີ III
# ກິດຈະການຊົນລະປະທານ

**ມາດຕາ 16 (ປັບປຸງ) ກິດຈະການຊົນລະປະທານ**

ກິດຈະການຊົນລະປະທານ ມີ ດັ່ງນີ້:

1. ການສຶກສາໂຄງການ;
2. ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການ;
3. ການກໍ່ສ້າງໂຄງການ;
4. ການຄວບຄຸມກວດກາຄຸນນະພາບການກໍ່ສ້າງໂຄງການ;
5. ການນຳໃຊ້ ແລະ ຟື້ນຟູສ້ອມແປງໂຄງການ;
6. ການຄຸ້ມຄອງກິດຈະການໂຄງການ.

## ໝວດທີ 1
## ການສຶກສາໂຄງການຊົນລະປະທານ

**ມາດຕາ 17 (ປັບປຸງ) ການສຶກສາໂຄງການ**

ການສຶກສາໂຄງການຊົນລະປະທານ ປະກອບດ້ວຍ ສອງ ຂັ້ນຕອນ ດັ່ງນີ້:

1. ການສຶກສາເບື້ອງຕົ້ນ ຊຶ່ງແມ່ນ ການສຶກສາໃນແຜນທີ່ ກ້າວໄປເຖິງ ການສຶກສາຄວາມເປັນໄປໄດ້ ແລະ ໄດ້ຜ່ານການປຶກສາຫາລືເປັນເອກະພາບຮ່ວມກັບຊຸມຊົນ ແລະ ເຈົ້າຂອງໂຄງການ;

2. ການສຶກສາຄວາມເປັນໄປໄດ້ ຊຶ່ງແມ່ນ ການສຶກສາຕາມຫຼັກການທາງດ້ານວິຊາການ ຢ່າງເປັນລະບົບຄົບຊຸດ ທາງດ້ານພູມສາດ, ທໍລະນີສາດ, ອຸທົກກະສາດ, ຄຸນນະພາບນໍ້າ, ເສດຖະກິດ-ສັງຄົມ, ເຕັກນິກ, ເຕັກໂນໂລຊີ, ລັກສະນະໂຄງການ, ຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທາງເລືອກໃນການອອກແບບ ເພື່ອການປະເມີນມູນຄ່າໂຄງການ.

ໂຄງການຊົນລະປະທານຂະໜາດໃຫຍ່ ແລະ ຂະໜາດກາງ ຕ້ອງດຳເນີນການ ສຶກສາຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້.

ສຳລັບໂຄງການຊົນລະປະທານຂະໜາດນ້ອຍ ສາມາດດຳເນີນການສຳຫຼວດ, ເກັບກຳຂໍ້ມູນດ້ານເຕັກນິກ ຕາມຫຼັກການທາງດ້ານວິຊາການຊົນລະປະທານ ຢູ່ພາກສະໜາມໃຫ້ຄົບຖ້ວນ ແລ້ວນຳມາຄິດໄລ່ອອກແບບເຕັກນິກກໍ່ສ້າງ ກ່ອນດຳເນີນການກໍ່ສ້າງ.

**ມາດຕາ 18 (ປັບປຸງ) ບົດລາຍງານຜົນຂອງການສຶກສາໂຄງການ**

ບົດລາຍງານຜົນຂອງການສຶກສາໂຄງການຊົນລະປະທານ ແມ່ນ ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ລວມທັງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ.

ເນື້ອໃນຂອງບົດລາຍງານຜົນຂອງການສຶກສາໂຄງການຊົນລະປະທານ ປະກອບດ້ວຍ:

1. ດ້ານນະໂຍບາຍ ແມ່ນ ສຶກສາກ່ຽວກັບຄວາມສອດຄ່ອງຂອງໂຄງການ ກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ດ້ານການເງິນ ແລະ ຜົນປະໂຫຍດຂອງການລົງທຶນ ແມ່ນ ປະເມີນມູນຄ່າລວມຂອງໂຄງການ, ຄວາມຕ້ອງການທາງດ້ານທຶນຮອນ, ແຫຼ່ງທຶນ ແລະ ປະສິດທິຜົນຈາກການລົງທຶນ;

3. ດ້ານເຕັກນິກ ແມ່ນ ການສຶກສາກ່ຽວກັບ ຂະໜາດຂອງໂຄງການ, ເຕັກນິກ-ເຕັກໂນໂລຊີ ທີ່ເໝາະສົມກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ລວມທັງການຄຸ້ມຄອງ, ການດຳເນີນງານ ແລະ ການປົກປັກຮັກສາໂຄງການໃຫ້ມີຄວາມຍືນຍົງ;

4. ດ້ານຊັບພະຍາກອນ ແມ່ນ ສຶກສາ ກ່ຽວກັບຄວາມຕ້ອງການທາງດ້ານວັດຖຸປະກອນ, ແຮງງານ, ການຝຶກອົບຮົມບຸກຄະລາກອນ ແລະ ອື່ນໆ;

5. ດ້ານການຈັດຕັ້ງ ແລະ ການຄຸ້ມຄອງໂຄງການ ແມ່ນ ສຶກສາ ກ່ຽວກັບການຈັດຕັ້ງທີ່ມີໃນປະຈຸບັນ ແລະ ຄວາມຈຳເປັນໃນການແຕ່ງຕັ້ງຄະນະຊີ້ນຳລວມ ແລະ ຄະນະວິຊາການຄຸ້ມຄອງການກໍ່ສ້າງ ແລະ ການນຳໃຊ້ນ້ຳຊົນລະປະທານປະຈຳໂຄງການສະເພາະ;

6. ດ້ານວັດທະນະທຳ-ສັງຄົມ ແມ່ນ ສຶກສາ ກ່ຽວກັບກຸ່ມເປົ້າໝາຍທີ່ໄດ້ຮັບຜົນປະໂຫຍດ ລວມທັງການສຶກສາຜົນກະທົບຕໍ່ການຍົກຍ້າຍຖິ່ນຖານ, ການຈັດສັນພູມລຳເນົາໃໝ່ ໃຫ້ໄດ້ຮັບຜົນປະໂຫຍດ ໂດຍກົງ ຫຼື ບຸລິມະສິດອັນດັບໜຶ່ງຈາກໂຄງການ, ການປົກປັກຮັກສາຮີດຄອງປະເພນີ, ວັດທະນະທຳ ທີ່ເປັນມໍຣະດົກຂອງປະຊາຊົນລາວບັນດາເຜົ່າ;

7. ດ້ານສິ່ງແວດລ້ອມ ແມ່ນ ສຶກສາ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ-ສັງຄົມ, ສຸຂະພາບຂອງປະຊາຊົນ ແລະ ອື່ນໆ ພ້ອມທັງມີມາດຕະການທີ່ເໝາະສົມ ເພື່ອປ້ອງກັນຜົນກະທົບທີ່ອາດຈະເກີດຂຶ້ນ.

**ມາດຕາ 19 (ປັບປຸງ) ການຮັບຮອງເອົາບົດລາຍງານຜົນຂອງການສຶກສາໂຄງການ**

ບົດລາຍງານຜົນຂອງການສຶກສາໂຄງການ ຕ້ອງໄດ້ຜ່ານການຮັບຮອງຈາກກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງສະພາວິທະຍາສາດຊົນລະປະທານ ຫຼື ຕ້ອງໄດ້ຜ່ານການຮັບຮອງ ຈາກພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມການສະເໜີຂອງຂະແໜງຊົນລະປະທານ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງກິດຈະການຊົນລະປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍສະບັບນີ້.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຮອງ ແລະ ອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ-ສັງຄົມ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

## ໝວດທີ 2
## ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການຊົນລະປະທານ

**ມາດຕາ 20 (ປັບປຸງ) ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການ**

ການສຳຫຼວດໂຄງການຊົນລະປະທານ ແມ່ນ ການເກັບກຳຂໍ້ມູນລະອຽດດ້ານຕ່າງໆ ຢູ່ສະໜາມຕົວຈິງ ໃຫ້ຄົບຖ້ວນ ເພື່ອເອົາມານຳໃຊ້ໃນການອອກແບບ ຕາມຫຼັກວິຊາການຊົນລະປະທານ ບົນພື້ນຖານການສຶກສາຄວາມເປັນໄປໄດ້ ເພື່ອສ້າງເປັນບົດວິພາກເສດຖະກິດ-ເຕັກນິກ.

ການອອກແບບເຕັກນິກກໍ່ສ້າງໂຄງການ ແມ່ນ ການສ້າງແຜນຜັງລະອຽດ ບົນພື້ນຖານການວິໄຈຂໍ້ມູນທີ່ໄດ້ມາຈາກການສຳຫຼວດ ຊຶ່ງປະກອບດ້ວຍ ແຜນຜັງລວມ, ແຜ່ນແຕ້ມ, ແບບກໍ່ສ້າງ, ເນື້ອທີ່ສິດນຳໃຊ້ທີ່ດິນຂອງຊາວກະສິກອນໃນເຂດຊົນລະປະທານ ໃຫ້ຖືກຕ້ອງຕາມກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ, ລາຄາຫົວໜ່ວຍຊົນລະປະທານ, ການປະເມີນມູນຄ່າຂອງໜ້າວຽກ ແລະ ກຳນົດແຜນການດຳເນີນງານການກໍ່ສ້າງໂຄງການ.

ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການ ຈະດຳເນີນໄດ້ກໍຕໍ່ເມື່ອມີງົບປະມານສະເພາະ ຂອງສົກປີນັ້ນ ຕາມການຄຸ້ມຄອງກິດຈະການຊົນລະປະທານ ທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້.

ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການ ຕ້ອງໃຫ້ມີການປະມູນ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 21 (ປັບປຸງ) ຂັ້ນຕອນຂອງການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການ**

ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການຊົນລະປະທານ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການສຳຫຼວດພູມສາດ, ທໍລະນີສາດ, ອຸທົກກະສາດ, ອຸຕຸກະເສດ, ຄຸນນະພາບນ້ຳ ແລະ ເນື້ອທີ່ສິດນຳໃຊ້ທີ່ດິນຂອງຊາວກະສິກອນໃນເຂດຊົນລະປະທານ;
2. ການອອກແບບເຕັກນິກກໍ່ສ້າງລະອຽດ ຕາມຫຼັກການຊົນລະປະທານ ແລະ ການປະເມີນມູນຄ່າໂຄງການ;
3. ການປະກອບເອກະສານໂຄງການ.

**ມາດຕາ 22 (ປັບປຸງ) ຄາດໝາຍຂອງການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການ**

ການສຳຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການຊົນລະປະທານ ຕ້ອງມີຄາດໝາຍ ດັ່ງນີ້:

1. ຖືກຕ້ອງຕາມກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກຂອງໂຄງການ ແລະ ລາຄາຫົວໜ່ວຍຊົນລະປະທານ ພ້ອມທັງສົ່ງເສີມການນຳໃຊ້ວັດຖຸກໍ່ສ້າງພາຍໃນ ແລະ ວັດຖຸທ້ອງຖິ່ນ ຕາມຄວາມເໝາະສົມ;
2. ຮັບປະກັນປະສິດທິຜົນດ້ານເສດຖະກິດ-ເຕັກນິກ, ວັດທະນະທຳ-ສັງຄົມ ແລະ ຜົນປະໂຫຍດຂອງປະຊາຊົນ;
3. ຮັບປະກັນການອະນຸລັກຊັບພະຍາກອນທຳມະຊາດ, ປົກປັກຮັກສາສິ່ງແວດລ້ອມ, ຊັບສິນຂອງລັດ, ລວມໝູ່ ແລະ ບຸກຄົນ;
4. ອອກແບບ ລະບົບປ້ອງກັນນ້ຳຖ້ວມ, ລະບົບລະບາຍນ້ຳ, ລະບົບປ້ອງກັນການເຊາະເຈື່ອນ, ລະບົບຊົນລະປະທານ ແລະ ລະບົບເສັ້ນທາງ ໃນເຂດພື້ນທີ່ໂຄງການ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
5. ນຳໃຊ້ນ້ຳໃຕ້ດິນ ເພື່ອເຮັດຊົນລະປະທານ ບ່ອນບໍ່ມີເງື່ອນໄຂນຳໃຊ້ນ້ຳໜ້າດິນ;
6. ອອກແບບ ອ່າງເກັບນ້ຳ, ໜອງສະ, ຄອງ ຫຼື ທໍ່ສົ່ງ ເພື່ອເກັບກັກ ແລະ ແຈກຢາຍນ້ຳໃຫ້ແກ່ການຜະລິດ.

**ມາດຕາ 23 (ປັບປຸງ) ການຄິດໄລ່ມູນຄ່າສຳຫຼວດ-ອອກແບບ**

ມູນຄ່າສຳຫຼວດ-ອອກແບບ ໃຫ້ຄິດໄລ່ ດັ່ງນີ້:

1. ມູນຄ່າສຳຫຼວດ-ອອກແບບ ລະບົບຊົນລະປະທານ ແລະ ການລະບາຍ;
2. ມູນຄ່າສຳຫຼວດ-ອອກແບບ ປ້ອງກັນຖ້ວມ ແລະ ການລະບາຍນ້ຳຖ້ວມຂັງພື້ນທີ່ກະສິກຳ;
3. ມູນຄ່າສຳຫຼວດ-ອອກແບບ ລະບົບປ້ອງກັນການເຊາະເຈື່ອນ ແລະ ລະບົບເສັ້ນທາງໃນເຂດພື້ນທີ່ໂຄງການ.

ມູນຄ່າສຳຫຼວດ-ອອກແບບ ຕ້ອງອີງຕາມໜ້າວຽກຕົວຈິງຂອງໂຄງການ ໂດຍປະຕິບັດຕາມ ລາຄາຫົວໜ່ວຍຊົນລະປະທານ ທີ່ໄດ້ກຳນົດໃນແຕ່ລະໄລຍະ.

ສຳລັບມູນຄ່າໂຄງການຊົນລະປະທານ ປະກອບດ້ວຍ ມູນຄ່າສຶກສາ, ສຳຫຼວດ-ອອກແບບ, ກໍ່ສ້າງຊົນລະປະທານ, ຄຸມງານການກໍ່ສ້າງ ແລະ ຄຸ້ມຄອງບໍລິຫານໂຄງການ ໃຫ້ອີງຕາມບໍລິມາດໜ້າວຽກຕ່າງໆ ຕາມການອອກແບບລະອຽດ ໂດຍປະຕິບັດຕາມລາຄາຫົວໜ່ວຍຊົນລະປະທານ ທີ່ໄດ້ກຳນົດໃນແຕ່ລະໄລຍະ.

**ມາດຕາ 24 (ປັບປຸງ) ການຮັບຮອງເອົາບົດລາຍງານຜົນຂອງການສໍາຫຼວດ-ອອກແບບເຕັກນິກກໍ່ ສ້າງໂຄງການ**

ບົດລາຍງານຜົນຂອງການສໍາຫຼວດ-ອອກແບບເຕັກນິກກໍ່ສ້າງໂຄງການຊົນລະປະທານ ຕ້ອງສົ່ງໃຫ້ກົມຊົນລະປະທານ ຫຼື ຂະແໜງຊົນລະປະທານຂັ້ນແຂວງ ຕາມການຄຸ້ມຄອງກິດຈະການຊົນລະປະທານ ທີ່ໄດ້ກໍານົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້.

ກົມຊົນລະປະທານ ຫຼື ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ອອກໃບຢັ້ງຢືນ, ຮັບຮອງເຕັກນິກຜົນການສຶກສາ, ສໍາຫຼວດ-ອອກແບບ ຊົນລະປະທານ ຕາມການສະເໜີ ຂອງສະພາວິທະຍາສາດຊົນລະປະທານ ຫຼື ຂະແໜງຊົນລະປະທານຂັ້ນແຂວງ.

## ໝວດທີ 3
## ການກໍ່ສ້າງໂຄງການຊົນລະປະທານ

**ມາດຕາ 25 (ປັບປຸງ) ການສະເໜີໂຄງການຊົນລະປະທານເຂົ້າແຜນການລົງທຶນຂອງລັດ**

ໂຄງການຊົນລະປະທານທຸກປະເພດ ແລະ ທຸກຂະໜາດ ທີ່ສະເໜີເຂົ້າແຜນການລົງທຶນຂອງລັດ ຫ້າປີ ແລະ ປະຈໍາປີ ຕ້ອງໄດ້ຜ່ານ ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ.

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ສັງລວມບັນດາໂຄງການ ທີ່ມີມູນຄ່າຫຼາຍ ກວ່າຊາວຕື້ກີບຂຶ້ນໄປ ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ກໍານົດໄວ້ ເພື່ອສະເໜີລັດຖະບານ ພິຈາລະນາ ໂດຍຜ່ານກະຊວງແຜນການ ແລະ ການລົງທຶນ.

ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ເປັນຜູ້ສັງລວມບັນດາໂຄງການ ທີ່ມີມູນຄ່າ ຫ້າຕື້ກີບ ຫາ ຊາວຕື້ກີບ ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ກໍານົດໄວ້ ເພື່ອນໍາສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ໂດຍຜ່ານພະແນກແຜນການ ແລະ ການລົງທຶນຂັ້ນແຂວງ.

ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ສັງລວມບັນດາໂຄງການ ທີ່ມີມູນຄ່າ ຫ້າຕື້ກີບ ລົງມາ ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດກໍານົດໄວ້ ເພື່ອນໍາສະເໜີເຈົ້າເມືອງ, ເຈົ້ານະຄອນ ພິຈາລະນາ ໂດຍຜ່ານຫ້ອງການແຜນການ ແລະ ການລົງທຶນຂັ້ນເມືອງ.

ການສະເໜີໂຄງການຊົນລະປະທານເຂົ້າແຜນການລົງທຶນຂອງລັດ ໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ.

**ມາດຕາ 26 (ປັບປຸງ) ການອະນຸມັດໂຄງການກໍ່ສ້າງຊົນລະປະທານ**

ໂຄງການກໍ່ສ້າງຊົນລະປະທານ ຈະໄດ້ຮັບການອະນຸມັດກໍຕໍ່ເມື່ອເປັນໂຄງການທີ່ນອນໃນແຜນການລົງທຶນຂອງລັດ ທີ່ໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ເທົ່ານັ້ນ.

**ມາດຕາ 27 (ປັບປຸງ) ການປະມູນໂຄງການກໍ່ສ້າງຊົນລະປະທານ**

ທຸກໂຄງການທີ່ໄດ້ຮັບການຮັບຮອງຈາກ ສະພາແຫ່ງຊາດ ແລະ ໂຄງການທີ່ໄດ້ຮັບທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ຕ້ອງໄດ້ດໍາເນີນການປະມູນ ຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ລະບຽບການຂອງຜູ້ໃຫ້ທຶນ.

**ມາດຕາ 28 (ປັບປຸງ) ເງື່ອນໄຂຂອງຜູ້ປະມູນໂຄງການກໍ່ສ້າງຊົນລະປະທານ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງເຂົ້າຮ່ວມການປະມູນໂຄງການກໍ່ສ້າງຊົນລະປະທານ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີໃບອະນຸຍາດດໍາເນີນທຸລະກິດກໍ່ສ້າງຊົນລະປະທານ ຕາມລະບຽບການຂອງກະຊວງກະສິກໍາ ແລະ ປ່າໄມ້, ຖ້າແມ່ນ ນິຕິບຸກຄົນ ຫຼື ການຈັດຕັ້ງຂອງຕ່າງປະເທດ ຕ້ອງໃຫ້ມີສໍານັກງານຕັ້ງຢູ່ ສປປ ລາວ;

2. ມີຖານະການເງິນທີ່ໝັ້ນຄົງ, ພຽງພໍ ໂດຍມີການຢັ້ງຢືນຈາກທະນາຄານຂອງ ສປປ ລາວ;

3. ມີນັກວິຊາການດ້ານຊົນລະປະທານ ທີ່ມີຄວາມຮູ້ ຄວາມສາມາດ, ມີປະສົບການ, ຮູ້ສ້າງເສັ້ນສະແດງແຜນການກໍ່ສ້າງ ແລະ ມີຜົນງານໃນການຈັດຕັ້ງປະຕິບັດໂຄງການຊົນລະປະທານຜ່ານມາ;

4. ມີພາຫະນະກົນຈັກ, ອຸປະກອນ ແລະ ເຄື່ອງມືຮັບໃຊ້ທາງດ້ານເຕັກນິກຢູ່ພາກສະໜາມ ທີ່ມີຄຸນນະພາບ ແລະ ທັນສະໄໝ ຊຶ່ງໄດ້ຜ່ານການກວດກາຈາກຂະແໜງການຊົນລະປະທານ;

5. ມີປະສົບການ ແລະ ຜົນງານຕົວຈິງ ທີ່ເໝາະສົມກັບປະເພດ ແລະ ຂະໜາດຊົນລະປະທານ;

6. ມີເງື່ອນໄຂອື່ນ ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 29 (ປັບປຸງ) ສັນຍາຮັບເໝົາກໍ່ສ້າງໂຄງການຊົນລະປະທານ**

ຜູ້ຊະນະການປະມູນ ຈະເປັນຜູ້ດຳເນີນການກໍ່ສ້າງໂຄງການຊົນລະປະທານ. ກ່ອນດຳເນີນການກໍ່ສ້າງເຈົ້າຂອງໂຄງການ ຕ້ອງເຮັດສັນຍາຮັບເໝົາກໍ່ສ້າງໂຄງການຊົນລະປະທານ ກັບຜູ້ຊະນະການປະມູນ.

ສັນຍາຮັບເໝົາກໍ່ສ້າງໂຄງການຊົນລະປະທານ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຮັບເໝົາ ຕ້ອງກໍ່ສ້າງ ຕາມຈຸດປະສົງຂອງເຈົ້າຂອງໂຄງການ ດ້ວຍວັດຖຸປະກອນຂອງເຈົ້າຂອງໂຄງການ ຫຼື ຂອງຕົນເອງ, ສ່ວນເຈົ້າຂອງໂຄງການ ຕ້ອງຮັບເອົາ ແລະ ຊຳລະຄ່າສິ່ງກໍ່ສ້າງ ຊຶ່ງໄດ້ຢັ້ງຢືນຜົນສຳເລັດຮ່ວມກັນ.

ສັນຍາຮັບເໝົາກໍ່ສ້າງໂຄງການຊົນລະປະທານ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ທີ່ຕັ້ງ ຂອງຄູ່ສັນຍາ;
2. ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ ແລະ ການຂົນສົ່ງ;
3. ຂອບເຂດ, ປະລິມານ ແລະ ຄຸນນະພາບ ຂອງເປົ້າໝາຍ;
4. ສິດ ແລະ ພັນທະຂອງຄູ່ສັນຍາ;
5. ສະຖານທີ່ ທີ່ປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ;
6. ຜົນສະທ້ອນຂອງການລະເມີດສັນຍາ;
7. ຮູບການ ແລະ ວິທີການແກ້ໄຂຂໍ້ຂັດແຍ່ງ;
8. ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ;
9. ພັນທະດ້ານພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ.

**ມາດຕາ 30 (ໃໝ່) ການກໍ່ສ້າງໂຄງການຊົນລະປະທານ**

ກ່ອນການກໍ່ສ້າງໂຄງການຊົນລະປະທານຜູ້ຮັບເໝົາກໍ່ສ້າງໂຄງການ ຕ້ອງດຳເນີນການສຳຫຼວດ-ອອກແບບກໍ່ສ້າງ ເພື່ອຄິດໄລ່ບໍລິມາດ ແລະ ມູນຄ່າຄືນໃໝ່ ໂດຍອີງຕາມໜ້າວຽກທີ່ໄດ້ຮັບຮອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້, ຈັດຕັ້ງປະຕິບັດການກໍ່ສ້າງຕາມມາດຕະຖານເຕັກນິກການກໍ່ສ້າງຊົນລະປະທານ ແລະ ປະຕິບັດຕາມແຜນການກໍ່ສ້າງໂຄງການຊົນລະປະທານ ທີ່ຜ່ານການຮັບຮອງແລ້ວ.

**ມາດຕາ 31 (ໃໝ່) ການປ້ອງກັນຄວາມປອດໄພການກໍ່ສ້າງ**

ຜູ້ຮັບເໝົາກໍ່ສ້າງໂຄງການຊົນລະປະທານ ຕ້ອງມີລະບົບຮັບປະກັນຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນຕົ້ນ ມາດຕະການນຳໃຊ້ອຸປະກອນປ້ອງກັນສ່ວນບຸກຄົນ, ການຕິດສັນຍາລັກ, ເຄື່ອງໝາຍ, ປ້າຍເຕືອນໄພ.

**ມາດຕາ 32 (ໃໝ່) ຄວາມຮັບຜິດຊອບຂອງເຈົ້າຂອງໂຄງການກໍ່ສ້າງ**

ເຈົ້າຂອງໂຄງການກໍ່ສ້າງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບໂຄງການ ແລະ ຄະນະກຳມະການປະມູນ;

2. ພິຈາລະນາຮັບຮອງ ແຜນການປະມູນ, ເອກະສານການປະມູນ, ຜົນຂອງການປະມູນ ແລະ ອະນຸມັດເຊັນສັນຍາ ໃນການຄັດເລືອກເອົາບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາກໍ່ສ້າງ;

3. ຊີ້ນໍາຄະນະຮັບຜິດຊອບໂຄງການ ໃນການຈັດຕັ້ງປະຕິບັດໂຄງການໃຫ້ໄປຕາມແຜນດໍາເນີນງານ, ຮັບປະກັນຄຸນນະພາບ ແລະ ງົບປະມານທີ່ໄດ້ຮັບອະນຸມັດ;

4. ຕິດຕາມ, ກວດກາໄລຍະດໍາເນີນງານ, ກິດຈະການຊຶນລະປະທານ ເພື່ອໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ສາມາດປະເມີນສະພາບການຈັດຕັ້ງປະຕິບັດກິດຈະການຊຶນລະປະທານ;

5. ພິຈາລະນາ ແລະ ຮັບຮອງແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກຂອງທີ່ປຶກສາ ແລະ ຜູ້ຮັບເໝົາກໍ່ສ້າງໃນກໍລະນີມີການສະເໜີດັດແກ້ແຜນ, ມູນຄ່າ ແລະ ເວລາ ໃນການຈັດຕັ້ງປະຕິບັດໂຄງການ;

6. ຕົກລົງການດັດແກ້, ໂຈະ, ອ່ວາຍທຶນ ແລະ ຍົກເລີກໂຄງການ;

7. ຊໍາລະຄ່າກໍ່ສ້າງ ແລະ ຄວບຄຸມການກໍ່ສ້າງໃຫ້ແກ່ບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາກໍ່ສ້າງຕາມສັນຍາ ທີ່ໄດ້ຕົກລົງກັນ.

**ມາດຕາ 33 (ໃໝ່) ຄວາມຮັບຜິດຊອບຂອງຄະນະຮັບຜິດຊອບໂຄງການກໍ່ສ້າງ**

ຄະນະຮັບຜິດຊອບໂຄງການ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຊ່ວຍຄະນະກໍາມະການປະມູນ ຈັດຕັ້ງການປະມູນເອົາບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາກໍ່ສ້າງ;

2. ຕິດຕາມ, ກວດກາ ການດໍາເນີນຂອງບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາກໍ່ສ້າງ;

3. ສະເໜີປ່ຽນຫົວໜ້າ, ຄະນະຂອງບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາ ພ້ອມດ້ວຍວິຊາການທີ່ບໍ່ສາມາດປະຕິບັດໜ້າທີ່ ຕາມການມອບໝາຍ;

4. ອອກແຈ້ງການ ຫຼື ແນະນໍາ ເຈົ້າຂອງບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາກໍ່ສ້າງ ໃຫ້ດໍາເນີນການຕາມສັນຍາທີ່ໄດ້ຕົກລົງກັນ;

5. ສະເໜີເຈົ້າຂອງໂຄງການ ສັ່ງໂຈະ ຫຼື ຍົກເລີກການຈັດຕັ້ງປະຕິບັດໂຄງການ ຂອງບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາກໍ່ສ້າງທີ່ບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ;

6. ລາຍງານສະພາບການຈັດຕັ້ງປະຕິບັດໂຄງການແຕ່ລະໄລຍະ ໃຫ້ເຈົ້າຂອງໂຄງການ ຢ່າງເປັນປົກກະຕິ;

7. ປະສານສົມທົບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການໃຫ້ສໍາເລັດ;

8. ເກັບຮັກສາສໍານວນເອກະສານຂອງໂຄງການ ເປັນຕົ້ນ ເອກະສານສັນຍາ, ເອກະສານດ້ານເຕັກນິກ ແລະ ເອກະສານການເງິນ;

9. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງເຈົ້າຂອງໂຄງການ.

**ມາດຕາ 34 (ໃໝ່) ຄວາມຮັບຜິດຊອບຂອງຄະນະກໍາມະການປະມູນ**

ຄະນະກໍາມະການປະມູນ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ກໍານົດຄວາມຕ້ອງການ, ເງື່ອນໄຂ ແລະ ຮັບຮອງເອກະສານການປະມູນ;

2. ດໍາເນີນການປະມູນ, ເປີດຊອງເອກະສານການປະມູນ;

3. ປະເມີນເອກະສານການປະມູນ ແລະ ດໍາເນີນການເຈລະຈາ;

4. ສະເໜີ ຮັບຮອງ, ໂຈະ ຫຼື ຍົກເລີກ ການປະມູນ;

5. ລາຍງານຜົນການປະມູນ ໃຫ້ເຈົ້າຂອງໂຄງການ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 35 (ປັບປຸງ) ສິດ ແລະ ພັນທະຂອງບໍລິສັດທີ່ປຶກສາ**

ບໍລິສັດທີ່ປຶກສາ ມີ ສິດ ແລະ ພັນທະ ດັ່ງນີ້:

1. ກະກຽມເອກະສານປະມູນ, ຮ່າງສັນຍາຮັບເໝົາກໍ່ສ້າງ ແລະ ເອກະສານອື່ນໆ ເພື່ອຮັບໃຊ້ໃຫ້ແກ່ໂຄງການ;

2. ກວດກາແຜນການ, ຄວບຄຸມການກໍ່ສ້າງ ແລະ ແນະນຳວິທີການໃຫ້ຜູ້ຮັບເໝົາໃຫ້ຖືກຕ້ອງ ຕາມແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ;

3. ປະຕິເສດ ການຮັບຮອງເອົາໜ້າວຽກໃດໜຶ່ງ ຂອງຜູ້ຮັບເໝົາກໍ່ສ້າງທີ່ບໍ່ຖືກຕ້ອງຕາມກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ພ້ອມທັງລາຍງານໃຫ້ເຈົ້າຂອງໂຄງການຮັບຊາບ ພາຍໃນ ເຈັດ ວັນ;

4. ຕິດຕາມ, ກວດກາ ແລະ ສະຫຼຸບບໍລິມາດແຕ່ລະໜ້າວຽກຢ່າງລະອຽດໃນແຕ່ລະໄລຍະ ເພື່ອຢັ້ງຢືນຄວາມຖືກຕ້ອງໃຫ້ແກ່ການຊຳລະຄ່າກໍ່ສ້າງ;

5. ລາຍງານຄວາມຄືບໜ້າຂອງໜ້າວຽກ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາອື່ນຂອງໂຄງການ ໃຫ້ເຈົ້າຂອງໂຄງການຢ່າງເປັນປົກກະຕິ;

6. ເກັບຮັກສາສຳນວນເອກະສານຂອງໂຄງການ ເປັນຕົ້ນ ເອກະສານສັນຍາ, ເອກະສານດ້ານເຕັກນິກ ແລະ ເອກະສານການເງິນ;

7. ໄດ້ຮັບຄ່າຄວບຄຸມການກໍ່ສ້າງ ຕາມມູນຄ່າທີ່ໄດ້ກຳນົດໄວ້ໃນສັນຍາ;

8. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ກົດໝາຍ.

**ມາດຕາ 36 (ໃໝ່) ສິດ ແລະ ພັນທະຂອງຜູ້ຮັບເໝົາກໍ່ສ້າງ**

ຜູ້ຮັບເໝົາກໍ່ສ້າງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

2. ປະຕິບັດຕາມຄຳແນະນຳ ຂອງເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ ແລະ ບໍລິສັດທີ່ປຶກສາໂຄງການ;

3. ສ້າງແຜນດຳເນີນງານ ນັບແຕ່ວັນເລີ່ມຕົ້ນຮອດວັນສຳເລັດ ແລ້ວສະເໜີຕໍ່ບໍລິສັດທີ່ປຶກສາ ແລະ ຄະນະຮັບຜິດຊອບໂຄງການ ເພື່ອຮັບຮອງເອົາ;

4. ດຳເນີນການກໍ່ສ້າງ ໃຫ້ຖືກຕ້ອງຕາມແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ຕາມທີ່ກຳນົດໄວ້ໃນສັນຍາ;

5. ແຈ້ງໃຫ້ບໍລິສັດທີ່ປຶກສາ ແລະ ຄະນະຮັບຜິດຊອບໂຄງການຊາບລ່ວງໜ້າ ກ່ອນປະຕິບັດໜ້າວຽກທີ່ໄດ້ກຳນົດໄວ້ໃນແຜນການກໍ່ສ້າງ ເພື່ອຕິດຕາມ ແລະ ກວດກາຕົວຈິງ;

6. ຄຸ້ມຄອງສະໜາມກໍ່ສ້າງ ແລະ ປະຕິບັດຕາມລະບຽບການ ກ່ຽວກັບ ຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນຕົ້ນ ຕິດຕັ້ງປ້າຍເຕືອນ, ປ້າຍສັນຍານ, ໄຟສັນຍານ, ສ້າງທາງເວັ້ນ ແລະ ມາດຕະການປ້ອງກັນຄວາມປອດໄພທີ່ຈຳເປັນ ລວມທັງຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ;

7. ອຳນວຍຄວາມສະດວກ ໃຫ້ຜູ້ຢູ່ອາໄສບໍລິເວນໃກ້ຄຽງ ໃນໄລຍະດຳເນີນການກໍ່ສ້າງ ພ້ອມທັງຮັບຜິດຊອບຕໍ່ຊີວິດ ແລະ ຊັບສິນ ຂອງຜູ້ຢູ່ອາໄສບໍລິເວນໃກ້ຄຽງ ໃນກໍລະນີທີ່ເກີດອຸປະຕິເຫດ ຍ້ອນຄວາມປະໝາດເລີ່ນເລີ້ຂອງຕົນ;

8. ລາຍງານຜົນການດຳເນີນການກໍ່ສ້າງໃຫ້ແກ່ຄະນະຮັບຜິດຊອບໂຄງການ ຫຼື ຄະນະກຳມະການກວດກາ ຢ່າງເປັນປົກກະຕິ;

9. ໄດ້ຮັບຄ່າກໍ່ສ້າງ ຕາມມູນຄ່າທີ່ໄດ້ກຳນົດໄວ້ໃນສັນຍາ.

10. ຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນ ເນື່ອງຈາກການບໍ່ປະຕິບັດຕາມສັນຍາ, ປະຕິບັດບໍ່ຖືກຕ້ອງ ຕາມກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກທີ່ໄດ້ຕົກລົງກັນ;

11. ປະຕິບັດພັນທະ ພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຕາມກົດໝາຍ;

12. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ ແລະ ກົດໝາຍ.

## ໝວດທີ 4
## ການຄວບຄຸມກວດກາຄຸນນະພາບການກໍ່ສ້າງໂຄງການຊົນລະປະທານ

### ມາດຕາ 37 (ປັບປຸງ) ການຄວບຄຸມກວດກາຄຸນນະພາບການກໍ່ສ້າງໂຄງການຊົນລະປະທານ

ເຈົ້າຂອງໂຄງການ ເປັນຜູ້ແຕ່ງຕັ້ງຄະນະວິຊາການ ຫຼື ເຮັດສັນຍາກັບບຸກຄົນ, ບໍລິສັດທີ່ປຶກສາ ທີ່ຊະນະການປະມູນ ໂດຍຜ່ານການຮັບຮອງຈາກເຈົ້າຂອງໂຄງການ ເພື່ອດໍາເນີນການຕິດຕາມ, ກວດກາ ແລະ ຄວບຄຸມການກໍ່ສ້າງໂຄງການຊົນລະປະທານໃຫ້ຖືກຕ້ອງຕາມກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ, ກໍານົດເວລາ, ມີຄຸນນະພາບ ແລະ ປອດໄພ.

ສັນຍາຄວບຄຸມກວດກາຄຸນນະພາບການກໍ່ສ້າງໂຄງການຊົນລະປະທານ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ບັນດາໜ້າວຽກ ກ່ຽວກັບ ການຕິດຕາມ, ກວດກາ ແລະ ຄວບຄຸມຄຸນນະພາບການກໍ່ສ້າງ;
2. ມູນຄ່າ ແລະ ວິທີການຊໍາລະສະສາງ;
3. ຄວາມຮັບຜິດຊອບຂອງແຕ່ລະຝ່າຍ;
4. ໄລຍະເວລາ ແລະ ແຜນດໍາເນີນງານກໍ່ສ້າງ;
5. ລະບົບການລາຍງານ;
6. ການປັບປຸງ, ປ່ຽນແປງ, ຍົກເລີກ ແລະ ການສິ້ນສຸດສັນຍາ;
7. ການແກ້ໄຂຂໍ້ຂັດແຍ່ງ.

### ມາດຕາ 38 (ໃໝ່) ການກວດກາເພື່ອຊໍາລະສະສາງ

ທຸກໂຄງການຊົນລະປະທານ ຕ້ອງໄດ້ຜ່ານການກວດກາເຕັກນິກເສຍກ່ອນ ເພື່ອເປັນບ່ອນອີງໃນການກວດກາການຊໍາລະສະສາງ.

ການກວດກາເພື່ອຊໍາລະສະສາງ ຢ່າງໜ້ອຍຄວາມຄືບໜ້າໃນການປະຕິບັດວຽກແຕ່ລະຄັ້ງ ບໍ່ໃຫ້ຫຼຸດສິບຫ້າສ່ວນຮ້ອຍ, ການຊໍາລະສະສາງມູນຄ່າກໍ່ສ້າງໃຫ້ແກ່ບໍລິສັດຜູ້ຮັບເໝົາ ຕ້ອງອີງຕາມບໍລິມາດວຽກ ທີ່ປະຕິບັດໄດ້ຕົວຈິງໃນແຕ່ລະຄັ້ງ.

ການກໍ່ສ້າງໂຄງການຊົນລະປະທານ ຕ້ອງມີການປະເມີນໃນແຕ່ລະໄລຍະ ເພື່ອບັນລຸເປົ້າໝາຍຂອງສັນຍາ. ໃນກໍລະນີການນໍາໃຊ້ເງິນຫາກບໍ່ໝົດຕາມມູນຄ່າສັນຍາໂຄງການ ເຈົ້າຂອງໂຄງການ ຕ້ອງສົ່ງເງິນຄືນເຂົ້າງົບປະມານແຫ່ງລັດ.

### ມາດຕາ 39 (ປັບປຸງ) ການກວດກາຜົນສໍາເລັດ ແລະ ຮັບຮອງເອົາໂຄງການກໍ່ສ້າງຊົນລະປະທານ

ພາຍຫຼັງໄດ້ດໍາເນີນການກໍ່ສ້າງຕາມສັນຍາ ບໍລິສັດທີ່ປຶກສາ ສົມທົບກັບຜູ້ຮັບເໝົາກໍ່ສ້າງ ລາຍງານເຈົ້າຂອງໂຄງການ ພ້ອມທັງປະກອບເອກະສານທີ່ກ່ຽວຂ້ອງ ເພື່ອດໍາເນີນການກວດກາໂຄງການກໍ່ສ້າງຊົນລະປະທານ ດັ່ງນີ້:

1. ບົດສະຫຼຸບບໍລິມາດວຽກ, ມູນຄ່າກໍ່ສ້າງລະອຽດຂອງບໍລິສັດຮັບເໝົາກໍ່ສ້າງ ທີ່ປະຕິບັດໄດ້ຕົວຈິງ ໂດຍຜ່ານການກວດກາຂອງບໍລິສັດທີ່ປຶກສາ ບົນພື້ນຖານສັນຍາຮັບເໝົາກໍ່ສ້າງ;

2. ແບບກໍ່ສ້າງສະບັບສຸດທ້າຍ ທີ່ໄດ້ຮັບການຢັ້ງຢືນຈາກເຈົ້າຂອງໂຄງການ;

3. ເອກະສານຄູ່ມື ການຄຸ້ມຄອງນຳໃຊ້ລະບົບຊົນລະປະທານ;

4. ບົດລາຍງານການສ້າງຕັ້ງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ.

ເມື່ອໄດ້ຮັບເອກະສານລາຍງານຜົນສຳເລັດການກໍ່ສ້າງໂຄງການຊົນລະປະທານແລ້ວ ໃຫ້ເຈົ້າຂອງໂຄງການ ແຕ່ງຕັ້ງຄະນະກຳມະການ ເພື່ອກວດກາໂຄງການດັ່ງກ່າວ ພາຍໃນສິບຫ້າວັນ ນັບແຕ່ວັນໄດ້ຮັບບົດລາຍງານເປັນຕົ້ນໄປ. ຖ້າເຫັນວ່າເອກະສານຄົບຖ້ວນ, ຖືກຕ້ອງ ແລະ ສອດຄ່ອງກັບໜ້າວຽກຕົວຈິງແລ້ວ ຄະນະກຳມະການກວດກາ ຕ້ອງຮັບຮອງເອົາໂຄງການດັ່ງກ່າວ ພາຍໃຕ້ເງື່ອນໄຂ ດັ່ງນີ້:

1. ບໍລິສັດຮັບເໝົາກໍ່ສ້າງ ຕ້ອງຄ້ຳປະກັນຄຸນນະພາບການກໍ່ສ້າງໂຄງການຊົນລະປະທານ ໜຶ່ງປີ ນັບແຕ່ວັນກວດກາຜົນສຳເລັດໂຄງການຄັ້ງສຸດທ້າຍ ໂດຍຫັກເງິນຈາກມູນຄ່າກໍ່ສ້າງໂຄງການ ສິບສ່ວນຮ້ອຍ ເຂົ້າໄວ້ຄັງເງິນແຫ່ງຊາດ ເພື່ອເປັນເງິນຄ້ຳປະກັນໂຄງການດັ່ງກ່າວ;

2. ພາຍຫຼັງສິ້ນສຸດໄລຍະຄ້ຳປະກັນ ເຈົ້າຂອງໂຄງການຕ້ອງແຕ່ງຕັ້ງຄະນະກຳມະການລົງກວດກາ ຖ້າວ່າບໍ່ມີການເປ່ເພເກີດຂຶ້ນ ຕ້ອງສົ່ງເງິນຄ້ຳປະກັນຄືນໃຫ້ບໍລິສັດຮັບເໝົາກໍ່ສ້າງຕາມສັນຍາ, ຖ້າຫາກມີການເປ່ເພ ບໍລິສັດຮັບເໝົາກໍ່ສ້າງຕ້ອງສ້ອມແປງຄືນ. ໃນກໍລະນີ ບໍລິສັດຮັບເໝົາກໍ່ສ້າງ ບໍ່ສ້ອມແປງຄືນພາຍໃນ ສາມສິບວັນ ນັບແຕ່ວັນໄດ້ແຈ້ງເຕືອນ ເຈົ້າຂອງໂຄງການ ມີສິດນຳໃຊ້ເງິນຄ້ຳປະກັນ ເພື່ອຈ້າງບໍລິສັດອື່ນມາສ້ອມແປງແທນ;

3. ໃນກໍລະນີມີການເປ່ເພ, ເສັຍຫາຍ ຍ້ອນໄພທຳມະຊາດທີ່ຮ້າຍແຮງ ຫຼື ເຫດສຸດວິໄສ ໃນໄລຍະຄ້ຳປະກັນນັ້ນ ບໍລິສັດຮັບເໝົາກໍ່ສ້າງ ຈະບໍ່ໄດ້ຮັບຜິດຊອບແຕ່ຢ່າງໃດ.

**ມາດຕາ 40 (ປັບປຸງ) ການມອບ-ຮັບໂຄງການຊົນລະປະທານ**

ພາຍຫຼັງທີ່ໂຄງການໄດ້ຮັບການຈັດຕັ້ງປະຕິບັດສຳເລັດຮ້ອຍສ່ວນຮ້ອຍ ຕາມບໍລິມາດວຽກທີ່ກຳນົດໄວ້ໃນສັນຍາ ໂດຍຜ່ານການກວດກາຢັ້ງຢືນຈາກເຈົ້າຂອງໂຄງການ ບໍລິສັດທີ່ປຶກສາ ແລະ ບໍລິສັດຮັບເໝົາກໍ່ສ້າງ ຕ້ອງກະກຽມເອກະສານຄົບຊຸດ ແລະ ຈັດຕັ້ງການມອບ-ຮັບໂຄງການຊົນລະປະທານ ໃຫ້ເຈົ້າຂອງໂຄງການ ເພື່ອນຳໃຊ້ຢ່າງເປັນທາງການ ພາຍໃນ ສາມສິບ ວັນ.

## ໝວດທີ 5
## ການນຳໃຊ້, ຟື້ນຟູ ແລະ ສ້ອມແປງໂຄງການຊົນລະປະທານ

**ມາດຕາ 41 (ປັບປຸງ) ການນຳໃຊ້ໂຄງການຊົນລະປະທານ**

ໂຄງການຊົນລະປະທານຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ໄດ້ຮັບມອບຈາກບໍລິສັດຮັບເໝົາກໍ່ສ້າງຢ່າງເປັນທາງການແລ້ວ ເຈົ້າຂອງໂຄງການ ຕາມການຄຸ້ມຄອງກິດຈະການຊົນລະປະທານ ທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບປະຈຳໂຄງການ ຫຼື ປະຈຳເຂດໂຄງການພ້ອມທັງກຳນົດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບ ໃຫ້ຄະນະຮັບຜິດຊອບດັ່ງກ່າວ ພາຍໃນກຳນົດຫົກສິບ ວັນ.

ການນຳໃຊ້ໂຄງການຊົນລະປະທານ ແມ່ນ ການບໍລິຫານຈັດການນ້ຳຊົນລະປະທານ ເພື່ອໃຊ້ເຂົ້າໃນການຜະລິດກະສິກຳເປັນຕົ້ນຕໍ ຕາມແຜນການແຈກຢາຍນ້ຳຂອງໂຄງການ ທີ່ໄດ້ຈັດລຽງບຸລິມະສິດຄວາມສຳຄັນຂອງການນຳໃຊ້ນ້ຳ, ນອກຈາກນັ້ນ ຈິ່ງສະໜອງໃຫ້ການຜະລິດນ້ຳປະປາ, ອຸດສາຫະກຳ, ການທ່ອງທ່ຽວ ແລະ ຈຸດປະສົງອື່ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ນ້ຳຊົນລະປະທານ ຕ້ອງເສັຍຄ່ານຳໃຊ້ນ້ຳຊົນລະປະທານຕາມລະບຽບການ ເວັ້ນເສຍແຕ່ການນຳໃຊ້ນ້ຳເພື່ອການທົດລອງ ຫຼື ສາທິດໂຄງການລົງທຶນຂອງລັດຖະບານ ແລະ ຕ້ອງໄດ້ຮັບການເຫັນດີຈາກຂະແໜງການກະສິກຳ ແລະ ປ່າໄມ້ ເສັຍກ່ອນ.

**ມາດຕາ 42 (ປັບປຸງ) ການຟື້ນຟູໂຄງການຊົນລະປະທານ**

ການຟື້ນຟູໂຄງການຊົນລະປະທານ ແມ່ນ ການປັບປຸງ, ແກ້ໄຂສ່ວນທີ່ເປ່ເພ ແລະ ຂຸດໂຊມໃຫ້ຢູ່ໃນສະພາບດີ, ສາມາດນຳໃຊ້ໄດ້ ເພື່ອຮັບປະກັນການສະໜອງນໍ້າໃຫ້ການຜະລິດ ໂດຍໃຫ້ສະມາຄົມ, ກຸ່ມຜູ້ນຳໃຊ້ນໍ້າ ແລະ ຜູ້ດຳເນີນທຸລະກິດ ມີສ່ວນຮ່ວມ.

**ມາດຕາ 43 (ໃໝ່) ການສ້ອມແປງໂຄງການຊົນລະປະທານ**

ການສ້ອມແປງໂຄງການຊົນລະປະທານ ແມ່ນ ການປັບປຸງ, ດັດແປງ ແກ້ໄຂສ່ວນທີ່ເປ່ເພ ຂອງລະບົບ ຫົວງານ, ຄອງເໝືອງ, ອາຄານ, ຄອງລະບາຍ, ປະຕູນໍ້າ ແລະ ຄູປ້ອງກັນນໍ້າຖ້ວມ ຈາກການນຳໃຊ້ ແລະ ຜົນກະທົບຈາກໄພທຳມະຊາດໃຫ້ກັບຄືນໃຊ້ງານໄດ້ປົກກະຕິ.

## ໝວດທີ 6
## ການຄຸ້ມຄອງກິດຈະການໂຄງການຊົນລະປະທານ

**ມາດຕາ 44 (ປັບປຸງ) ການຄຸ້ມຄອງການສຶກສາໂຄງການຊົນລະປະທານ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງການສຶກສາໂຄງການຊົນລະປະທານຂະໜາດໃຫຍ່ ຜ່ານສະພາວິທະຍາສາດເຕັກນິກຊົນລະປະທານ ຊຶ່ງແມ່ນ ກົມຊົນລະປະທານ ເປັນຜູ້ສັງລວມຈາກຜູ້ດຳເນີນທຸລະກິດ ເພື່ອຄົ້ນຄວ້າ, ກວດກາ ແລະ ສະເໜີລາຍງານ ໂດຍມີການປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນຜູ້ຄຸ້ມຄອງການສຶກສາໂຄງການຊົນລະປະທານຂະໜາດກາງ ແລະ ຂະໜາດນ້ອຍ ໂດຍຜ່ານສະພາວິທະຍາສາດເຕັກນິກຊົນລະປະທານຂັ້ນແຂວງ ຊຶ່ງແມ່ນ ຂະແໜງຊົນລະປະທານຂັ້ນແຂວງ ຮ່ວມກັບຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ສັງລວມຈາກຜູ້ດຳເນີນທຸລະກິດ ເພື່ອຄົ້ນຄວ້າ, ກວດກາ ແລະ ສະເໜີລາຍງານ ໂດຍມີການປະສານສົມທົບກັບພະແນກການ ແລະ ພາກສ່ວນອື່ນຂັ້ນແຂວງທີ່ກ່ຽວຂ້ອງ.

**ມາດຕາ 45 (ປັບປຸງ) ການຄຸ້ມຄອງການສຳຫຼວດ-ອອກແບບເຕັກນິກໂຄງການຊົນລະປະທານ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງການສຳຫຼວດ-ອອກແບບເຕັກນິກໂຄງການຊົນລະປະທານຂະໜາດໃຫຍ່ ໂດຍຜ່ານສະພາເຕັກນິກວິທະຍາສາດຊົນລະປະທານ ຊຶ່ງແມ່ນ ກົມຊົນລະປະທານ ເປັນຜູ້ສັງລວມຈາກຜູ້ດຳເນີນທຸລະກິດ ເພື່ອຄົ້ນຄວ້າ, ກວດກາ ແລະ ສະເໜີລາຍງານ ໂດຍມີການປະສານສົມທົບກັບຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນຜູ້ຄຸ້ມຄອງການສຳຫຼວດ-ອອກແບບເຕັກນິກໂຄງການຊົນລະປະທານຂະໜາດກາງ ແລະ ຂະໜາດນ້ອຍ ໂດຍຜ່ານສະພາວິທະຍາສາດເຕັກນິກຊົນລະປະທານຂັ້ນແຂວງ ຊຶ່ງແມ່ນຂະແໜງຊົນລະປະທານຂັ້ນແຂວງ ຮ່ວມກັບຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ສັງລວມຈາກຜູ້ດຳເນີນທຸລະກິດ ເພື່ອຄົ້ນຄວ້າ, ກວດກາ ແລະ ສະເໜີລາຍງານ ໂດຍມີການປະສານສົມທົບກັບພະແນກການ ແລະ ພາກສ່ວນອື່ນຂັ້ນແຂວງທີ່ກ່ຽວຂ້ອງ. ກໍລະນີການສຳຫຼວດ-ອອກແບບເຕັກນິກໂຄງ ການຊົນລະປະທານຂະໜາດກາງ ເຕັກນິກສັບສົນ ເປັນຕົ້ນ ການສຳຫຼວດ-ອອກແບບ ເຂື່ອນ, ຝາຍນໍ້າລົ້ນ ໃຫ້ສະເໜີຜ່ານສະພາວິທະຍາສາດເຕັກນິກຊົນລະປະທານ, ກົມຊົນລະປະທານ.

ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ຄຸ້ມຄອງການສຳຫຼວດ-ອອກແບບເຕັກນິກໂຄງການຊົນລະປະທານປອງຊົນ ໂດຍແມ່ນໜ່ວຍງານຊົນລະປະທານຂັ້ນເມືອງ ເປັນຜູ້ສັງລວມຈາກອົງການປົກຄອງບ້ານ ໂດຍຜ່ານການຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຈາກຂະແໜງຊົນລະປະທານຂັ້ນແຂວງ.

**ມາດຕາ 46 (ປັບປຸງ) ການຄຸ້ມຄອງການກໍ່ສ້າງໂຄງການຊົນລະປະທານ**

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງການກໍ່ສ້າງໂຄງການຊົນລະປະທານຂະໜາດໃຫຍ່ ຫຼື ເປັນໂຄງການທີ່ມີມູນຄ່າການລົງທຶນຫຼາຍກວ່າ ຊາວຕື້ກີບຂຶ້ນໄປ ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດກໍານົດໄວ້.

ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ເປັນຜູ້ຄຸ້ມຄອງການກໍ່ສ້າງໂຄງການຊົນລະປະທານຂະໜາດກາງ ຫຼື ເປັນໂຄງການທີ່ມີມູນຄ່າການລົງທຶນ ຫຼາຍກວ່າ ຫ້າຕື້ກີບ ຫາ ຊາວຕື້ກີບ ຕາມຕາມກົດໝາຍວ່າດ້ວຍການລົງທຶນຂອງລັດກໍານົດໄວ້.

ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ຄຸ້ມຄອງການກໍ່ສ້າງໂຄງການຊົນລະປະທານຂະໜາດນ້ອຍ ແລະ ໂຄງການຊົນລະປະທານປອງຊົນ ຫຼື ເປັນໂຄງການທີ່ມີມູນຄ່າການລົງທຶນ ຫ້າຕື້ ກີບ ລົງມາ ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດກໍານົດໄວ້.

**ມາດຕາ 47 (ປັບປຸງ) ການຄຸ້ມຄອງການນໍາໃຊ້, ຟື້ນຟູ ແລະ ສ້ອມແປງໂຄງການຊົນລະປະທານ**

ການຄຸ້ມຄອງການນໍາໃຊ້, ຟື້ນຟູ ແລະ ສ້ອມແປງໂຄງການຊົນລະປະທານ ທຸກຂະໜາດ ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ຮັບຜິດຊອບຊີ້ນໍາຄະນະຄຸ້ມຄອງ ແລະ ນໍາໃຊ້ປະຈໍາໂຄງການ, ປະຈໍາເຂດໂຄງການ ຂຶ້ນແຜນງົບປະມານນໍາໃຊ້, ຟື້ນຟູ ແລະ ສ້ອມແປງໂຄງການຊົນລະປະທານ ເພື່ອສະເໜີຕໍ່ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ເອົາເຂົ້າແຜນງົບປະມານປະຈໍາປີ.

## ພາກທີ IV
## ຄວາມປອດໄພຂອງເຂື່ອນ ແລະ ອ່າງເກັບນໍ້າຊົນລະປະທານ

**ມາດຕາ 48 (ໃໝ່) ຄວາມປອດໄພຂອງເຂື່ອນຊົນລະປະທານ**

ຄວາມປອດໄພຂອງເຂື່ອນຊົນລະປະທານ ແມ່ນ ການຮັບປະກັນມາດຕະຖານດ້ານເຕັກນິກ ກ່ຽວກັບການສຶກສາ, ສໍາຫຼວດ-ອອກແບບ ແລະ ການກໍ່ສ້າງໂຄງການຊົນລະປະທານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15, 17 ແລະ 20 ຂອງກົດໝາຍສະບັບນີ້, ການນໍາໃຊ້ເຂື່ອນຊົນລະປະທານ ໃຫ້ມີຄວາມປອດໄພ, ມີຄວາມສະຖຽນລະພາບ ເພື່ອປ້ອງກັນຜົນເສຍຫາຍຕໍ່ເສດຖະກິດ–ສັງຄົມ, ສິ່ງແວດລ້ອມ ແລະ ພື້ນທີ່ການຜະລິດກະສິກໍາ.

**ມາດຕາ 49 (ໃໝ່) ການຄຸ້ມຄອງອ່າງເກັບນໍ້າຊົນລະປະທານ**

ການຄຸ້ມຄອງອ່າງເກັບນໍ້າຊົນລະປະທານ ແມ່ນ ຂະບວນການດໍາເນີນການຢ່າງເປັນຂັ້ນຕອນ ເພື່ອໃຫ້ບັນລຸຈຸດປະສົງຂອງອ່າງເກັບນໍ້າທີ່ກໍານົດໄວ້. ຫຼັກການສໍາຄັນໃນການຄຸ້ມຄອງ ບໍລິຫານຈັດການອ່າງເກັບນໍ້ານັ້ນຕ້ອງໄດ້ຄໍານຶງເຖິງການປົກປັກຮັກສາສະພາບແວດລ້ອມ, ປະລິມານນໍ້າໄຫຼເຂົ້າອ່າງ, ການຮັບປະກັນບໍລິມາດເກັບກັກນໍ້າ ແລະ ຄຸນນະພາບນໍ້າ ເພື່ອຮັບປະກັນການສະໜອງນໍ້າແກ່ເນື້ອທີ່ການຜະລິດກະສິກໍາ ແລະ ອຸປະໂພກ-ບໍລິໂພກ.

**ມາດຕາ 50 (ໃໝ່) ຂັ້ນໄດປາ ຫຼື ທາງຜ່ານປາ**

ຂັ້ນໄດປາ ຫຼື ທາງຜ່ານປາ ແມ່ນ ສິ່ງທີ່ຖືກສ້າງຂຶ້ນມາ ຕາມຄວາມຕ້ອງການທີ່ຈະຊ່ວຍໃຫ້ປາ ແລະ ສັດນໍ້າອື່ນ ສາມາດເດີນທາງຜ່ານສິ່ງກີດຂວາງທາງເດີນໄປໄດ້ ເຊັ່ນ: ກໍລະນີສ້າງເຂື່ອນ, ຝາຍນໍ້າລົ້ນ, ປະຕູນໍ້າ ທີ່ຕັນແລວນໍ້າທີ່ປາ ແລະ ສັດນໍ້າ ມີການເດີນທາງຂຶ້ນ, ລົງ ເພື່ອຫາແຫຼ່ງອາຫານ, ຂະຫຍາຍພັນ ແລະ ຫຼົບລ້ຽງ

ສະພາບແວດລ້ອມທີ່ບໍ່ເໝາະສົມ ເປັນຕົ້ນ ໃນການສຶກສາ, ສຳຫຼວດ-ອອກແບບ ແລະ ການກໍ່ສ້າງຂົ້ນໃດປາ ຫຼື ທາງຜ່ານປາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15, 17 ແລະ 20 ຂອງກົດໝາຍສະບັບນີ້.

**ມາດຕາ 51 (ໃໝ່) ເຂດສະຫງວນຊົນລະປະທານ**

ເຂດສະຫງວນຊົນລະປະທານ ແມ່ນ ພື້ນທີ່ໂຄງການຊົນລະປະທານທີ່ໄດ້ສຶກສາ, ສຳຫຼວດ-ອອກແບບ ແລະ ກໍ່ສ້າງໂຄງການຊົນລະປະທານ ຊຶ່ງປະກອບດ້ວຍ ພື້ນທີ່ຫົວງານ, ພື້ນທີ່ອ່າງເກັບນ້ຳ, ລະບົບສົ່ງນ້ຳ, ພື້ນທີ່ທຳການຜະລິດ ທີ່ມີຫຼັກໝາຍກັນຊົນທີ່ສະຫງວນໄວ້ ໂດຍບໍ່ອະນຸຍາດໃຫ້ມີການກໍ່ສ້າງ, ປຸກສ້າງ ຫຼື ດຳເນີນກິດຈະການໃດໜຶ່ງ ເວັ້ນເສັຍແຕ່ໄດ້ຮັບອະນຸຍາດຈາກກະຊວງກະສິກຳ ແລະ ປ່າໄມ້ ໂດຍສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ສຳລັບລາຍລະອຽດ ກ່ຽວກັບເຂດສະຫງວນຊົນລະປະທານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ V
## ລະບົບຂໍ້ມູນ ຂ່າວສານ ຊົນລະປະທານ

**ມາດຕາ 52 (ໃໝ່) ລະບົບຂໍ້ມູນ ຂ່າວສານ ຊົນລະປະທານ**

ລະບົບຂໍ້ມູນ ຂ່າວສານ ຊົນລະປະທານ ແມ່ນ ບ່ອນເກັບກຳ, ສັງລວມ, ວິເຄາະ, ວິໄຈ, ຕິດຕາມ, ກວດກາ, ຈັດເປັນລະບົບ, ຮັກສາ, ເຜີຍແຜ່ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຊົນລະປະທານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

**ມາດຕາ 53 (ໃໝ່) ການສ້າງລະບົບຂໍ້ມູນ ຂ່າວສານ ຊົນລະປະທານ**

ກະຊວງກະສິກຳ ແລະ ປ່າໄມ້ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນຂ່າວສານ ຊົນລະປະທານ ທີ່ສາມາດສະໜອງ, ແລກປ່ຽນ ແລະ ເຊື່ອມຕໍ່ຖານຂໍ້ມູນຂ່າວສານ ທີ່ພົວພັນກັບຊົນລະປະທານຂອງທ້ອງຖິ່ນ.

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານ ຊົນລະປະທານ ລວມທັງການສະໜອງ ແລະ ແລກປ່ຽນຂໍ້ມູນ ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 54 (ໃໝ່) ການເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ**

ຜູ້ທີ່ຕ້ອງການນຳໃຊ້ຂໍ້ມູນດິບ ຕ້ອງກຳນົດເປົ້າໝາຍຂອງການນຳໃຊ້, ກຳນົດ ແຫຼ່ງຂໍ້ມູນ ແລະ ແລກປ່ຽນຜົນຂອງການນຳໃຊ້ຂໍ້ມູນດັ່ງກ່າວ ກັບກົມຊົນລະປະທານ, ຂະແໜງຊົນລະປະທານຂັ້ນແຂວງ ແລະ ໜ່ວຍງານຊົນລະປະທານຂັ້ນເມືອງ.

## ພາກທີ VI
## ທຸລະກິດຊົນລະປະທານ

**ມາດຕາ 55 (ປັບປຸງ) ປະເພດທຸລະກິດຊົນລະປະທານ**

ປະເພດທຸລະກິດຊົນລະປະທານ ມີ ດັ່ງນີ້:

1. ການສຶກສາ, ສຳຫຼວດ-ອອກແບບ ໂຄງການຊົນລະປະທານ;

2. ທີ່ປຶກສາດ້ານຊີນລະປະທານ;
3. ການກໍ່ສ້າງ, ຟື້ນຟູ ສ້ອມແປງໂຄງການຊົນລະປະທານ;
4. ທຸລະກິດຊົນລະປະທານອື່ນ.

**ມາດຕາ 56 (ປັບປຸງ) ການດໍາເນີນທຸລະກິດກ່ຽວກັບຊົນລະປະທານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນທຸລະກິດກ່ຽວກັບຊົນລະປະທານ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງໄດ້ໃບທະບຽນວິສາຫະກິດ ຕ້ອງຂໍອະນຸຍາດດໍາເນີນທຸລະກິດຈາກຂະແໜງການກະສິກໍາ ແລະ ປ່າໄມ້.

**ມາດຕາ 57 (ໃໝ່) ເງື່ອນໄຂຂອງການດໍາເນີນທຸລະກິດກ່ຽວກັບຊົນລະປະທານ**

ການດໍາເນີນທຸລະກິດກ່ຽວກັບຊົນລະປະທານ ຕ້ອງມີເງື່ອນໄຂ ດັ່ງນີ້:
1. ມີໃບທະບຽນວິສາຫະກິດ;
2. ມີ ທຶນ, ສິ່ງປຸກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;
3. ມີບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດໍາເນີນທຸລະກິດ;
4. ມີນັກວິຊາການທີ່ມີຄວາມຮູ້ດ້ານຊົນລະປະທານ ລະດັບຊັ້ນກາງຂຶ້ນໄປ ແລະ ມີໃບຢັ້ງຢືນການຜ່ານການປະຕິບັດວຽກງານຕົວຈິງ ສໍາລັບທຸລະກິດກ່ຽວກັບຊົນລະປະທານ;
5. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດຊົນລະປະທານ.

**ມາດຕາ 58 (ໃໝ່) ເອກະສານປະກອບການຂໍອະນຸຍາດດໍາເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດໍາເນີນທຸລະກິດ ມີ ດັ່ງນີ້:
1. ຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດ ຕາມແບບພິມ ທີ່ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດໍາເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 59 (ໃໝ່) ການພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດ**

ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບຊົນລະປະທານ ພາຍໃນເວລາ ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບຢ່າງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດ ອອກໃບອະນຸຍາດດໍາເນີນທຸລະກິດກ່ຽວກັບຊົນລະປະທານໄດ້ ຕ້ອງແຈ້ງເຫດຜົນ ຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍພາຍໃນກໍານົດເວລາດັ່ງກ່າວ.

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ກໍານົດ ຂັ້ນຕອນ, ເງື່ອນໄຂ ແລະ ເອກະສານປະກອບ ໃນການອະນຸຍາດດໍາເນີນທຸລະກິດ ກ່ຽວກັບ ຊົນລະປະທານ.

**ມາດຕາ 60 (ໃໝ່) ໃບອະນຸຍາດດໍາເນີນທຸລະກິດ**

ໃບອະນຸຍາດດໍາເນີນທຸລະກິດກ່ຽວກັບຊົນລະປະທານ ມີອາຍຸການນໍາໃຊ້ ໜຶ່ງ ປີ ແລະ ສາມາດຕໍ່ໄດ້. ໃບອະນຸຍາດດໍາເນີນທຸລະກິດ ບໍ່ສາມາດໃຫ້ໂອນ ຫຼື ມອບໃຫ້ບຸກຄົນອື່ນນໍາໃຊ້.

**ມາດຕາ 61 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ດໍາເນີນທຸລະກິດ**

ຜູ້ດໍາເນີນທຸລະກິດ ກ່ຽວກັບຊົນລະປະທານ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມ ການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;

2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຊົນລະປະທານ;

3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານຊົນລະປະທານ;

5. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຂະແໜງການກະສິກຳ ແລະ ປ່າໄມ້;

6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ;

7. ນຳໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 (ປັບປຸງ) ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບຊົນລະປະທານ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;

2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;

3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດຳເນີນທຸລະກິດ ກ່ຽວກັບຊົນລະປະທານ ບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 63 (ໃໝ່) ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຊົນລະປະທານ ຈະຖືກຖອນ ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມຄຳສັ່ງໂຈະ, ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ພາຍໃນເວລາຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

## ພາກທີ VII
## ກຸ່ມ ແລະ ສະມາຄົມ

**ມາດຕາ 64 (ໃໝ່) ກຸ່ມຜູ້ນຳໃຊ້ນ້ຳ**

ກຸ່ມຜູ້ນຳໃຊ້ນ້ຳ ແມ່ນ ການຈັດຕັ້ງລວມໝູ່ຂອງປະຊາຊົນ ທີ່ໄດ້ຮັບຜົນປະໂຫຍດຈາກການນຳໃຊ້ນ້ຳຊົນລະປະທານ ໂດຍສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນການຄຸ້ມຄອງ ແລະ ນຳໃຊ້ນ້ຳຊົນລະປະທານໃຫ້ມີປະສິດທິຜົນ ຊຶ່ງໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນຈາກອົງການປົກຄອງຂັ້ນເມືອງ.

**ມາດຕາ 65 (ປັບປຸງ) ສະມາຄົມຜູ້ນຳໃຊ້ນ້ຳ**

ສະມາຄົມຜູ້ນຳໃຊ້ນ້ຳ ແມ່ນ ການຮ່ວມກັນຂອງຫຼາຍກຸ່ມຜູ້ນຳໃຊ້ນ້ຳທີ່ມີຄວາມເຂັ້ມແຂງ ມີພາລະບົດບາດ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ຂະແໜງການກ່ຽວຂ້ອງ, ອົງການຈັດຕັ້ງທັງພາຍໃນ ແລະ ສາກົນ ເພື່ອບັນລຸເປົ້າໝາຍໃນການຄຸ້ມຄອງນຳໃຊ້ລະບົບຊົນລະປະທານ ຕະຫຼອດເຖິງການວາງແຜນການພັດທະນາການຜະລິດກະສິກຳ ໃນເຂດພື້ນທີ່ການຜະລິດໃຫ້ມີປະສິດທິພາບ ແລະ ຍືນຍົງ, ພ້ອມທັງໃຫ້ການ

ຊ່ວຍເຫຼືອ, ໃຫ້ຄຳປຶກສາ, ໃຫ້ຄຳແນະນຳ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ ຊຶ່ງສະມາຄົມ ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນຈາກກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 66 (ໃໝ່) ສິດ ແລະ ພັນທະຂອງກຸ່ມຜູ້ນຳໃຊ້ນ້ຳ**

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ມີ ສິດ ແລະ ພັນທະ ດັ່ງນີ້:

1. ເຄື່ອນໄຫວຕາມແນວທາງນະໂຍບາຍ, ກົດໝາຍ ແລະ ກົດລະບຽບຂອງກຸ່ມ;
2. ເປັນເຈົ້າການບຳລຸງຮັກສາ,ສ້ອມແປງຊົນລະປະທານ, ຄຸ້ມຄອງຊັບສິນ ແລະ ຜົນທີ່ໄດ້ຮັບຈາກການດຳເນີນງານຂອງຕົນ ຕາມກົດລະບຽບຂອງກຸ່ມ;
3. ສ້າງແຜນຄຸ້ມຄອງບໍລິຫານຈັດການນ້ຳ ແລະ ລະບາຍນ້ຳໃນພື້ນທີ່ໂຄງການ ໃຫ້ແກ່ສະມາຊິກກຸ່ມຜູ້ນຳໃຊ້ນ້ຳ ຢ່າງທົ່ວເຖິງ ແລະ ເປັນທຳ;
4. ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງສະມາຊິກພາຍໃນກຸ່ມ, ການຈັດຕັ້ງ ແລະ ພາກສ່ວນອື່ນ ດ້ວຍຮູບການໄກ່ເກ່ຍ ຫຼື ການປະນີປະນອມ, ປະຕິບັດລະບຽບວິໄນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;
5. ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ມີພັນທະໃນການບົວລະບັດຮັກສາ, ຟື້ນຟູ, ສ້ອມແປງໂຄງການຊົນລະປະທານ, ເສຍຄ່ານຳໃຊ້ນ້ຳ ເຂົ້າກອງທຶນພັດທະນາຊົນລະປະທານ ແລະ ການປະກອບສ່ວນອື່ນ ເພື່ອຜົນປະໂຫຍດລວມຂອງໂຄງການຊົນລະປະທານ;
6. ເປີດກອງປະຊຸມສະຫຼຸບຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດການຄຸ້ມຄອງນຳໃຊ້ລະບົບຊົນລະປະທານ ແລະ ວາງແຜນການຜະລິດໃນແຕ່ລະດູການຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ.

**ມາດຕາ 67 (ໃໝ່) ສິດ ແລະ ພັນທະຂອງສະມາຄົມຜູ້ນຳໃຊ້ນ້ຳ**

ສະມາຄົມຜູ້ນຳໃຊ້ນ້ຳຊົນລະປະທານ ມີ ສິດ ແລະ ພັນທະ ດັ່ງນີ້:

1. ເຄື່ອນໄຫວຕາມແນວທາງນະໂຍບາຍ, ກົດໝາຍ ແລະ ກົດລະບຽບຂອງສະມາຄົມ;
2. ຂົນຂວາຍ, ຍາດແຍ່ງແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາສະມາຄົມຜູ້ນຳໃຊ້ນ້ຳ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ;
3. ຊຸກຍູ້ສົ່ງເສີມວຽກງານການຄ◌ຸມຄອງນຳໃຊ້ຊົນລະປະທານ, ສົ່ງເສີມການປູກ-ການລ້ຽງ, ຄຸ້ມຄອງປ່າໄມ້ ໃນເຂດອ່າງເກັບນ້ຳຊົນລະປະທານ, ການຄຸ້ມຄອງ ແລະ ການພັດທະນາທີ່ດິນກະສິກຳຂັ້ນພື້ນຖານ;
4. ສົ່ງເສີມການຜະລິດເປັນສິນຄ້າ, ສະໜອງປັດໃຈການຜະລິດ ແລະ ແຫຼ່ງຈຳໜ່າຍຜະລິດຕະພັນກະສິກຳ ເພື່ອພັດທະນາສະມາຄົມໃຫ້ມີຄວາມຍືນຍົງ;
5. ສ້າງແຜນຄຸ້ມຄອງບໍລິຫານຈັດການນ້ຳ ແລະ ລະບາຍນ້ຳໃນພື້ນທີ່ໂຄງການ ໃຫ້ແກ່ສະມາຊິກສະມາຄົມຜູ້ນຳໃຊ້ນ້ຳ ຢ່າງທົ່ວເຖິງ ແລະ ເປັນທຳ;
6. ຊີ້ນຳ-ນຳພາ ບັນດາກຸ່ມຜູ້ນຳໃຊ້ນ້ຳ ບົວລະບັດຮັກສາ, ຟື້ນຟູ, ສ້ອມແປງໂຄງການຊົນລະປະທານ, ເສຍຄ່ານຳໃຊ້ນ້ຳ ເຂົ້າກອງທຶນພັດທະນາຊົນລະປະທານ ແລະ ການປະກອບສ່ວນອື່ນ ເພື່ອຜົນປະໂຫຍດລວມຂອງໂຄງການຊົນລະປະທານ;
7. ສ້າງຕັ້ງ ແລະ ຄຸ້ມຄອງກອງທຶນສະມາຄົມຜູ້ນຳໃຊ້ນ້ຳຊົນລະປະທານ;
8. ເປີດກອງປະຊຸມສະຫຼຸບຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດ ການຄຸ້ມຄອງນຳໃຊ້ລະບົບຊົນລະປະທານ ແລະ ວາງແຜນການຜະລິດ ໃນແຕ່ລະດູການຮ່ວມກັບກຸ່ມຜູ້ນຳໃຊ້ນ້ຳ ຢ່າງເປັນປົກກະຕິ;
9. ປົກປັກຮັກສາສິ່ງແວດລ້ອມ, ປູກຕົ້ນໄມ້ ໃຫ້ເປັນປ່າໃນເຂດອ່າງຮັບນ້ຳ;

10.ນຳໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ, ລະບຽບການ ແລະ ກົດລະບຽບ ຂອງສະມາຄົມ.

**ມາດຕາ 68 (ປັບປຸງ) ກອງທຶນກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ**

ກອງທຶນກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ແມ່ນ ກອງທຶນ ທີ່ສ້າງຕັ້ງຂຶ້ນໂດຍກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ເພື່ອລະດົມ ແລະ ສະສົມທຶນຈາກແຫຼ່ງຕ່າງໆ ແນໃສ່ຮັບປະກັນໃຫ້ມີງົບປະມານພຽງພໍ ແລະ ຍືນຍົງ ນຳໃຊ້ເຂົ້າໃນການສ້ອມແປງ ແລະ ບຳລຸງຮັກສາຊົນລະປະທານ ທີ່ຢູ່ໃນຄວາມຮັບຜິດຊອບຂອງກຸ່ມ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ກອງທຶນກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ໄດ້ມາຈາກ ຄ່ານຳໃຊ້ນ້ຳຊົນລະປະທານ, ການປະກອບສ່ວນທຶນ ຂອງສະມາຊິກ, ບຸກຄົນ, ນິຕິບຸກຄົນ, ຜູ້ດຳເນີນທຸລະກິດ ຫຼື ການຈັດຕັ້ງ.

ສຳລັບລາຍລະອຽດ ກ່ຽວກັບ ການສ້າງຕັ້ງ, ການຄຸ້ມຄອງ ແລະ ນຳໃຊ້ກອງທຶນກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 69 (ໃໝ່) ສະມາຄົມວິຊາຊີບຊົນລະປະທານ**

ສະມາຄົມວິຊາຊີບຊົນລະປະທານ ແມ່ນ ອົງການຈັດຕັ້ງສັງຄົມໜຶ່ງ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງກະສິກຳ ແລະ ປ່າໄມ້ ມີພາລະບົດບາດເຕົ້າໂຮມຄວາມສາມັກຄີ, ສະຕິປັນຍາຂອງນັກວິສະວະກອນ, ນັກວິຊາການ ແລະ ຜູ້ດຳເນີນທຸລະກິດດ້ານຊົນລະປະທານ ພາຍໃຕ້ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ຈັນຍາບັນວິຊາຊີບ ເພື່ອປົກປ້ອງ, ສົ່ງເສີມ ແລະ ພັດທະນາວິຊາຊີບຂອງຕົນ ປະກອບສ່ວນເຂົ້າໃນການສ້າງຄຸນປະໂຫຍດໃຫ້ແກ່ສັງຄົມ ແລະ ການສ້າງສາພັດທະນາປະເທດຊາດ.

ສຳລັບລາຍລະອຽດ ກ່ຽວກັບ ການສ້າງຕັ້ງ, ການຄຸ້ມຄອງສະມາຄົມວິຊາຊີບຊົນລະປະທານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 70 (ໃໝ່) ສິດ ແລະ ພັນທະຂອງສະມາຄົມວິຊາຊີບຊົນລະປະທານ**

ສະມາຄົມວິຊາຊີບຊົນລະປະທານ ມີສິດ ແລະ ພັນທະ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກ່ຽວກັບວຽກງານຊົນລະປະທານ;
2. ສ້າງກົດລະບຽບພາຍໃນ, ກຳນົດຈັນຍາບັນ ແລະ ລະບຽບການ ເພື່ອຄຸ້ມຄອງວິສະວະກອນ ແລະ ນັກວິຊາການຊົນລະປະທານຂອງຕົນ;
3. ມີຄຳເຫັນກ່ຽວກັບການສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຊົນລະປະທານ;
4. ໄດ້ຮັບຂໍ້ມູນ ຂ່າວສານກ່ຽວກັບວຽກງານຊົນລະປະທານ;
5. ຍົກລະດັບທາງດ້ານວິຊາການຊົນລະປະທານ ລວມທັງຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກ;
6. ປະສານສົມທົບ ແລະ ພົວພັນຮ່ວມມືກັບສະມາຄົມວິຊາຊີບອື່ນ ທັງພາຍໃນ ແລະ ຕ່າງປະເທດ;
7. ຕິດຕາມການເຄື່ອນໄຫວຂອງສະມາຊິກ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງສະມາຄົມຂອງຕົນ ຕໍ່ອົງການຄຸ້ມຄອງ ແລະ ກວດກາວຽກງານຊົນລະປະທານ;
9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VIII
# ກອງທຶນຊົນລະປະທານ

**ມາດຕາ 71 (ໃໝ່) ກອງທຶນຊົນລະປະທານ**

ກອງທຶນຊົນລະປະທານ ຂຽນຫຍໍ້ວ່າ "ກທຊ" ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມ ແລະ ລະດົມຈາກແຫຼ່ງທຶນຕ່າງໆ ແນໃສ່ຮັບປະກັນໃຫ້ມີງົບປະມານ ນໍາໃຊ້ເຂົ້າໃນການພັດທະນາຊົນລະປະທານ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍຢູ່ພາຍໃຕ້ການຄຸ້ມຄອງ ແລະ ຕິດຕາມ, ກວດກາຂອງກະຊວງກະສິກໍາ ແລະ ປ່າໄມ້.

**ມາດຕາ 72 (ໃໝ່) ແຫຼ່ງທຶນຂອງກອງທຶນຊົນລະປະທານ**

ແຫຼ່ງທຶນຂອງກອງທຶນຊົນລະປະທານ ໄດ້ມາຈາກ:

1. ເກັບຄ່ານໍາໃຊ້ນໍ້າຊົນລະປະທານ;
2. ງົບປະມານຂອງລັດ;
3. ການປະກອບສ່ວນຂອງໂຄງການລົງທຶນ, ພາກສ່ວນທຸລະກິດ ແລະ ບຸກຄົນທົ່ວໄປ;
4. ການຊ່ວຍເຫຼືອຂອງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
5. ລາຍຮັບຈາກການບໍລິຫານກອງທຶນ;
6. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 73 (ໃໝ່) ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນຊົນລະປະທານ**

ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນຊົນລະປະທານ ຕ້ອງນໍາໃຊ້ເຂົ້າໃນວຽກງານຊົນລະປະທານ, ຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້, ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

ສໍາລັບລາຍລະອຽດ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ກອງທຶນຊົນລະປະທານ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IX
# ຂໍ້ຫ້າມ

**ມາດຕາ 74 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ທໍາລາຍ ລະບົບຫົວງານ, ລະບົບສິ່ງນໍ້າ ແລະ ລະບົບລະບາຍນໍ້າຊົນລະປະທານ;
2. ທໍາລາຍສະພາບແວດລ້ອມໃນພື້ນທີ່ຮັບນໍ້າ ຂອງອ່າງເກັບນໍ້າຊົນລະປະທານ;
3. ດໍາເນີນບັນດາກິດຈະການຊົນລະປະທານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ໂດຍບໍ່ໄດ້ຮັບອະນຸຍາດ;
4. ນໍາໃຊ້ນໍ້າຊົນລະປະທານ ເຂົ້າໃນເປົ້າໝາຍອື່ນ ທີ່ບໍ່ແມ່ນກະສິກໍາ ໂດຍບໍ່ໄດ້ຮັບອະນຸຍາດ;
5. ຂັດຂວາງ, ບໍ່ອໍານວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມືແກ່ການດໍາເນີນການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງຊົນລະປະທານ;

6. ໃຫ້ສິນບົນ ແລະ ໃຊ້ຄວາມຮຸນແຮງ ນາບຂູ່ພະນັກງານຊົນລະປະທານ, ທີ່ປຶກສາ, ເຈົ້າຂອງໂຄງການ ແລະ ຄະນະຄຸ້ມຄອງໂຄງການ ເພື່ອປະໂຫຍດສ່ວນຕົວ;

7. ເພີ່ມບໍລິມາດ, ລາຄາຫົວໜ່ວຍ, ຖ່ວງດຶງການປະຕິບັດສັນຍາທຸກຮູບແບບ ແລະ ແກ່ຍາວເວລາໃນການປະຕິບັດໂຄງການ ເພື່ອຜົນປະໂຫຍດສ່ວນຕົວ;

8. ນຳໃຊ້ສັນຄອງຊົນລະປະທານ ແລະ ສັນຄູປ້ອງກັນນໍ້າຖ້ວມ ເປັນເສັ້ນທາງຂົນສົ່ງສິ່ງຂອງເກີນນໍ້າໜັກ ທີ່ໄດ້ຮັບອະນຸຍາດ;

9. ເປີດ-ປິດປະຕູນໍ້າ ແລະ ຂຸດເຈາະຄອງຊົນລະປະທານ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຄະນະຄຸ້ມຄອງໂຄງການ;

10.ຫຼົບຫຼີກ, ຊັກຊ້າ, ແກ່ຍາວ ການເສຍຄ່ານໍ້າຊົນລະປະທານ ຫຼື ເສຍບໍ່ຄົບຖ້ວນ;

11.ນຳໃຊ້ເອກະສານການສຶກສາ, ການສຳຫຼວດ-ອອກແບບ ທີ່ບໍ່ໄດ້ຜ່ານການຮັບຮອງຈາກສະພາວິທະຍາສາດເຕັກນິກຊົນລະປະທານ;

12.ຂາຍໂຄງການຊົນລະປະທານ ທີ່ຕົນເອງປະມູນໄດ້;

13.ນຳໃຊ້ທີ່ດິນເຂດຊົນລະປະທານ ໄປເປັນດິນປຸກສ້າງ, ດິນອຸດສາຫະກຳ ແລະ ດິນປະເພດອື່ນ;

14.ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 75 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານຊົນລະປະທານ**

ຫ້າມ ພະນັກງານຊົນລະປະທານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ທວງເອົາ, ຂໍເອົາ ຄ່າທຳນຽມ, ຄ່າບໍລິການ, ຮັບເອົາສິນບົນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິ ບັດໜ້າທີ່;

4. ກົດໜ່ວງ, ຖ່ວງດຶງ ແລະ ທຳລາຍເອກະສານ;

5. ດຳເນີນ ຫຼື ເຂົ້າຮ່ວມ ການດຳເນີນທຸລະກິດ ກ່ຽວກັບຊົນລະປະທານ;

6. ເປີດເຜີຍຄວາມລັບຂອງລັດ ຫຼື ເອກະສານທາງລັດຖະການ ກ່ຽວກັບການປະມູນ ໂຄງການຊົນລະປະທານ;

7. ປອມແປງເອກະສານ, ເຮັດສັນຍາ ໂດຍບໍ່ສອດຄ່ອງກັບແຜນດຳເນີນງານໂຄງການ, ລາຍງານບໍ່ຖືກຕ້ອງກັບຄວາມຈິງ;

8. ອອກຂໍ້ຕົກລົງ ສັ່ງຜູ້ດຳເນີນທຸລະກິດເຮັດນອກແຜນ;

9. ເຊັນຢັ້ງຢືນເອກະສານການຊຳລະສະສາງໃຫ້ຜູ້ດຳເນີນທຸລະກິດ ໂດຍບໍ່ໄດ້ອີງໃສ່ຜົນການກວດກາໜ້າວຽກ ແລະ ບໍລິມາດຢູ່ສະໜາມ ທີ່ຜູ້ດຳເນີນທຸລະກິດປະຕິບັດໄດ້ຕົວຈິງ ແລະ ຄວາມເປັນເອກະພາບ ຂອງຄະນະກຳມະການກວດກາ;

10.ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 76 (ໃໝ່) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດກ່ຽວກັບຊົນລະປະທານ**

ຫ້າມ ຜູ້ດຳເນີນທຸລະກິດ ກ່ຽວກັບຊົນລະປະທານ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ກໍ່ສ້າງໂດຍບໍ່ຖືກຕ້ອງຕາມ ແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ;

2. ລອກແບບແຜນຜັງຂອງວິສະວະກອນບຸກຄົນອື່ນ ເພື່ອຜົນປະໂຫຍດສ່ວນຕົວ;

3. ສຳຫຼວດ, ອອກແບບ, ກໍ່ສ້າງ, ຄວບຄຸມ ແລະ ກວດກາ ໂຄງການກໍ່ສ້າງ, ສ້ອມແປງຊົນລະປະທານ ໂດຍຜູ້ດຽວກັນ;

4. ສົມຮູ້ຮ່ວມຄິດ ແລະ ໃຫ້ສິນບົນ ເຈົ້າຂອງໂຄງການ;

5. ດຳເນີນການກໍ່ສ້າງໂດຍບໍ່ມີມາດຕະຖານ ປ້ອງກັນຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ;

6. ມອບ ຫຼື ໂອນ ໂຄງການກ່ຽວກັບຊົນລະປະທານໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

7. ປ່ອຍປະລະເລີຍວຽກງານ ຫຼື ໂຄງການກໍ່ສ້າງ ທີ່ຕົນໄດ້ເຊັນສັນຍາກັບເຈົ້າຂອງໂຄງການ;

8. ປອມແປງເອກະສານ ຫຼື ໃຫ້ຂໍ້ມູນກ່ຽວກັບໂຄງການຊົນລະປະທານ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ X
# ການຄຸ້ມຄອງ ແລະ ການກວດກາວຽກງານຊົນລະປະທານ
## ໝວດທີ 1
## ການຄຸ້ມຄອງວຽກງານຊົນລະປະທານ

### ມາດຕາ 77 (ປັບປຸງ) ອົງການຄຸ້ມຄອງວຽກງານຊົນລະປະທານ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຊົນລະປະທານ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ, ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຊົນລະປະທານ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
4. ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ.

### ມາດຕາ 78 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້

ໃນການຄຸ້ມຄອງວຽກງານຊົນລະປະທານ ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານຊົນລະປະທານ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານຊົນລະປະທານ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຊົນລະປະທານ;

4. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຊົນລະປະທານ;

5. ສ້າງແຜນການຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ກອງທຶນພັດທະນາຊົນລະປະທານ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຊົນລະປະທານ;

6. ຄົ້ນຄວ້າ, ວິໄຈ, ປະກອບຄຳເຫັນ ແລະ ຄຸ້ມຄອງການສຶກສາ, ການສຳຫຼວດ-ອອກແບບ ແລະ ການກໍ່ສ້າງໂຄງການຊົນລະປະທານຂະໜາດໃຫຍ່;

7. ຊຸກຍູ້ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ໃນການຈັດຕັ້ງປະຕິບັດ, ປະເມີນຜົນການຄຸ້ມຄອງ ແລະ ນຳໃຊ້, ຕິດຕາມ, ວັດແທກລະບົບການເຮັດວຽກຂອງຫົວງານ ແລະ ລະບົບຄອງທົດ ແລະ ຄອງລະບາຍ ໂຄງການຊົນລະປະທານຂະໜາດໃຫຍ່;

8. ພັດທະນາເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ, ເຜີຍແຜ່ ແລະ ນຳໃຊ້ເຂົ້າໃນການພັດທະນາຊົນລະປະທານ;

9. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຊົນລະປະທານ;

10.ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຊົນລະປະທານ;

11.ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ສຳລັບວຽກງານຊົນລະປະທານ;

12.ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຊົນລະປະທານ;

13.ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

14.ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊົນລະປະທານ;

15.ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຊົນລະປະທານ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

16.ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 79 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານຊົນລະປະທານ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊົນລະປະທານ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຊົນລະປະທານ;

3. ສະເໜີອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ໂຈະ ຫຼື ລົບລ້າງ ກ່ຽວກັບວຽກງານຊົນລະປະທານ;

4. ຊີ້ນຳ, ຕິດຕາມ, ປະເມີນຜົນດ້ານເຕັກນິກ, ຜົນການຈັດຕັ້ງປະຕິບັດ ໂຄງການຊົນລະປະທານຂະໜາດກາງ ແລະ ຂະໜາດນ້ອຍ;

5. ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຊົນລະປະທານ;

6. ຊຸກຍູ້ ຫ້ອງກະສິກຳ ແລະ ປ່າໄມ້ຂັ້ນເມືອງ ໃນການຈັດຕັ້ງປະຕິບັດ, ປະເມີນຜົນການຄຸ້ມຄອງ ແລະ ນຳໃຊ້, ລະບົບຫົວງານ ແລະ ລະບົບທົດ ແລະ ຄອງລະບາຍ;

7. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວຽກງານຊົນລະປະທານ;

8. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຊົນລະປະທານ;

9. ສະເໜີ ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ສຳລັບວຽກງານຊົນລະປະທານ;

10.ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ວຽກງານຊົນລະປະທານ;

11.ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

12.ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊົນລະປະທານ ຕາມການມອບໝາຍຂອງຂັ້ນເທິງ;

13.ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຊົນລະປະທານ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

14.ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 80 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານຊົນລະປະທານ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຊົນລະປະທານ;

2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຊົນລະປະທານ;

3. ສະເໜີອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ໂຈະ ຫຼື ລົບລ້າງ ກ່ຽວກັບວຽກງານຊົນລະປະທານ;

4. ຊຸກຍູ້ອົງການປົກຄອງບ້ານ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ເຂົ້າຮ່ວມຄຸ້ມຄອງ, ນຳໃຊ້ຊົນລະປະທານ;

5. ເຂົ້າຮ່ວມ ປະກອບຄຳເຫັນ ກ່ຽວກັບການສຶກສາ, ການສຳຫຼວດ-ອອກແບບ, ການກໍ່ສ້າງໂຄງການຊົນລະປະທານທຸກຂະໜາດ;

6. ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຊົນລະປະທານ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຄຸ້ມຄອງ ແລະ ນຳໃຊ້ໂຄງການຊົນລະປະທານ ຂອງຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳເຂດໂຄງການ;

8. ຄຸ້ມຄອງ ແລະ ນຳໃຊ້, ປັບປຸງລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຊົນລະປະທານ;

9. ສະເໜີ ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ສຳລັບວຽກງານຊົນລະປະທານ;

10.ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ວຽກງານຊົນລະປະທານ;

11.ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການ ທີ່ກ່ຽວຂ້ອງ;

12.ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຊົນລະປະທານ ຕໍ່ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

13.ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 81 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານຊົນລະປະທານ ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຮ່ວມກັບຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳໂຄງການ ວາງແຜນຄຸ້ມຄອງ ແລະ ນຳໃຊ້ຊົນລະປະທານປວງຊົນ ແລະ ທີ່ດິນເຂດຊົນລະປະທານ ໃຫ້ກຸ່ມຜູ້ນຳໃຊ້ນ້ຳ ແລະ ຊາວກະສິກອນ;

2. ສົມທົບກັບຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳໂຄງການ ສ້າງແຜນພັດທະນາຊົນລະປະທານ ຕາມຈຸດພິເສດ, ທ່າແຮງ ແລະ ຄວາມຕ້ອງການຂອງບ້ານ ພ້ອມທັງຊຸກຍູ້ ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ແລະ ຊາວກະສິກອນ ຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ;

3. ເກັບກຳຂໍ້ມູນ ກ່ຽວກັບຊົນລະປະທານ ຂອງບ້ານ ເປັນຕົ້ນ ຂອບເຂດເນື້ອທີ່ການຜະລິດ, ຄວາມຍາວຂອງຄອງເໝືອງ, ສະພາບການສົ່ງນ້ຳຂອງຫົວງານ, ອາຄານ ແລະ ຄອງເໝືອງ ແຕ່ລະເສັ້ນ;

4. ປຸກລະດົມ ຊາວກະສິກອນ ປົກປັກຮັກສາ, ຄຸ້ມຄອງ ແລະ ນຳໃຊ້ໂຄງການຊົນລະປະທານ ໃຫ້ມີປະສິດທິພາບ, ປະສິດທິຜົນ;

5. ສົມທົບກັບຄະນະຄຸ້ມຄອງ ແລະ ນຳໃຊ້ປະຈຳໂຄງການ ສ້າງແຜນງົບປະມານຟື້ນຟູ ສ້ອມແປງຊົນລະປະທານປ່ວງຊົນ ເພື່ອສະເໜີຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ສັງລວມເຂົ້າແຜນ;

6. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຊົນລະປະທານພາຍໃນບ້ານຂອງຕົນ ຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

7. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ປະສານສົມທົບ ແລະ ຮ່ວມມື ກັບຂະແໜງການກະສິກຳ ແລະ ປ່າໄມ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຊົນລະປະທານ

**ມາດຕາ 83 (ປັບປຸງ) ອົງການກວດກາວຽກງານຊົນລະປະທານ**

ອົງການກວດກາວຽກງານຊົນລະປະທານ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຊົນລະປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 77 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການ ຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 84 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານຊົນລະປະທານ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊົນລະປະທານ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບຊົນລະປະທານ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານຊົນລະປະທານ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 85 (ປັບປຸງ) ຮູບການ ການກວດກາ**

ການກວດກາວຽກງານຊົນລະປະທານ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຊົນລະປະທານ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

# ພາກທີ XI
# ວັນຊົນລະປະທານແຫ່ງຊາດ, ເຄື່ອງແບບ ແລະ ເຄື່ອງໝາຍ ຊົນລະປະທານ

**ມາດຕາ 86 ວັນຊົນລະປະທານແຫ່ງຊາດ**

ລັດກຳນົດເອົາ ວັນທີ 3 ພະຈິກ ເປັນວັນຊົນລະປະທານແຫ່ງຊາດ. ເພື່ອລະນຶກເຖິງວັນດັ່ງກ່າວ ໃນແຕ່ລະປີ ທົ່ວປະເທດ ຕ້ອງສ້າງຂະບວນການຈັດຕັ້ງອະນາໄມລະບົບຄອງເໝືອງ, ການກວດກາຫົວງານ, ອາຄານຕ່າງໆ, ເປີດນ້ຳ ແລະ ກະກຽມຄວາມພ້ອມໃນທຸກດ້ານ ແນໃສ່ຮັບປະກັນການສະໜອງນ້ຳແກ່ການຜະລິດໃຫ້ທັນລະດູການ.

**ມາດຕາ 87 (ໃໝ່) ເຄື່ອງແບບ ແລະ ເຄື່ອງໝາຍຊົນລະປະທານ**

ພະນັກງານຊົນລະປະທານ ມີ ເຄື່ອງແບບ ແລະ ເຄື່ອງໝາຍ ທີ່ເປັນສັນຍາລັກສະເພາະຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຊຶ່ງໄດ້ຮັບຮອງຈາກກະຊວງກະສິກຳ ແລະ ປ່າໄມ້.

# ພາກທີ XII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 88 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດສັນຍາ ແລະ ກົດໝາຍສະບັບນີ້ ເປັນຕົ້ນ ການຄົ້ນຄວ້າເຕັກນິກ-ເຕັກໂນໂລຊີ ທີ່ກ້າວໜ້າ ແລະ ທັນສະໄໝ ເຂົ້າໃນການພັດທະນາກິດຈະການຊົນລະປະທານ ໃຫ້ເກີດປະໂຫຍດສູງສຸດ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 89 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ສັນຍາ ແລະ ກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ XIII
# ບົດບັນຍັດສຸດທ້າຍ

**ມາດຕາ 90 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 91 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ ........................ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີວັນທີ 14 ທັນວາ 2012.

**ປະທານສະພາແຫ່ງຊາດ**